SYVONGSAK et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 102 - 113.

# ລົດວັນນະຄະດີໃນນະວະນິຍາຍ “ພາຍຸຊີວິດ” ຂອງ ດາວເໜືອ

**ສົມທະເພີຍ ສີວົງສັກ [1], ສັງຄົມ ສີສຸພັນ, ໄລອ້ອນ ນິ້ມນວນ ແລະ ອຳໄພ ສອນທະລາ**

*ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ*

[1] ***ຕິດຕໍ່ພົວພັນ:*** *ສົມທະເພີຍ ສີວົງສັກ, ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, ເບີໂທ: +856 20 98003648, ອີເມວ:* syvongsak123@gmail.com

***ຂໍ້ມູນບົດຄວາມ:***
*ວັນທີສະໜັກ: 03 ພຶດສະພາ 2021*
*ປັບປຸງສຳເລັດ:16 ພຶດສະພາ 2021*
*ຕອບ-ຮັບ:25 ພຶດສະພາ 2021*

**ບົດຄັດຫຍໍ້:**

ການຄົ້ນຄວ້າຄັ້ງນີ້ ແມ່ນສຶກສາລົດວັນນະຄະດີໃນນະວະນິຍາຍ ”ພາຍຸຊີວິດ“ ຂອງ ດາວເໜືອ ຊຶ່ງເປັນການສຶກສາທາງຄຸນນະພາບ, ມີຈຸດປະສົງ ເພື່ອສຶກສາລົດຄວາມຮັກທີ່ສະແດງອອກຜ່ານນະວະນິຍາຍ ຕາມທິດສະດີຂອງມະຫາ ສີລາ ວີລະວົງ ປະກອບກັບທິດສະດີຂອງ ມາເຣດ ຊາມາ. ວິທີການສຶກສາໂດຍໃຊ້ການວິເຄາະ, ອະທິບາຍ, ຕີຄວາມ ແລະ ປະເມີນຄ່າ.

ຜົນການສຶກສາພົບວ່າ ນັກແຕ່ງມີຄວາມສາມາດພັນລະນາຄວາມຮັກໃນຫຼາຍລົດຊາດເຊັ່ນ ລົດຄວາມຮັກລະຫວ່າງສະມາຊິກໃນຄອບຄົວປະກອບມີ: ຄວາມຮັກຂອງພໍ່ແມ່ທີ່ມີຕໍ່ລູກ, ຄວາມຮັກຂອງລູກຕໍ່ພໍ່ແມ່ ແລະຄວາມຮັກແບບອ້າຍນ້ອງຮ່ວມອຸທອນ; ລົດຄວາມຮັກລະຫວ່າງໝູ່ເພື່ອນປະກອບມີ: ຄວາມຮັກລະຫວ່າງໝູ່ເພື່ອນທົ່ວໄປ ແລະຄວາມຮັກລະຫວ່າງໝູ່ເພື່ອນຮ່ວມອຸດົມການ; ລົດຄວາມຮັກລະຫວ່າງໜຸ່ມສາວປະກອບມີ: ລົດຄວາມຮັກທີ່ເກີດຈາກໃຈຈິງ ແລະຄວາມຮັກທີ່ຖືກບັງຄັບ. ນະວະນິຍາຍ “ພາຍຸຊີວິດ” ຂອງ ດາວເໜືອ ແມ່ນບົດປະພັນວັນນະຄະດີບົດໜຶ່ງ ທີ່ນັກຂຽນໄດ້ພັນລະນາເຖິງລົດຄວາມຮັກໃນວັນນະຄະດີໄດ້ຢ່າງມີລົດຊາດ ແລະສາມາດສ້າງອາລົມໃຫ້ແກ່ຜູ້ອ່ານໄດ້ເປັນຢ່າງດີ. ສ່ວນຫຼາຍເປັນຄວາມຮັກທີ່ມາຈາກໃຈຈິງ, ຮັກດ້ວຍຄວາມບໍລິສຸດ, ມີຫຼາຍແບບ, ຫຼາຍລົດ, ເມື່ອໄດ້ອ່ານ, ໄດ້ຟັງແລ້ວຮູ້ສຶກຊາບຊຶ້ງ, ໄດ້ອັດຖະລົດຢ່າງແທ້ຈິງ.

**ຄຳສຳຄັນ:**

*ລົດວັນນະຄະດີ, ຄວາມຮັກ, ນະວະນິຍາຍ.*

# LiteratureTastes in Daoneua’s “Pharyouxivid” Novel

**Somthapheuy SYVONGSAK [1], Sangkhom SYSOUPHANH, Laion NIMNUAN and Amphai SONETHALA**

*Department of Language Pedagogy, Faculty of Education ,Souphanouvong University, Lao PDR*

[1] ***Corresponding Author:*** *Somthapheuy SYVONGSAK, Department of Language Pedagogy, Faculty of Education, Souphanouvong, University, Tel: +856 20 98003648, E-mail:* syvongsak123@gmail.com.

***Article Info:***
*Submitted: May 3, 2021*
*Revised: May 16, 2021*
*Accepted: May 25, 2021*

**Abstract:**

This research is to study literature tastes inDaoneua’s “Pharyouxivid” novel. It is a qualitive study which aims to investigate love that is shown through the novel based on Maha Sila Vilavong’s theories and Males Sama’s. Analysis, explanation, interpretation and evaluation were employed as methods. The findings shows that the authors could describe various kinds of love such as love among family members: Parents’ love for children, children’s love for parents and love among siblings; love among friends: love among general friends, love among real friends; love among couples: sincere love and coercive love.Daoneua’s “Pharyouxivid” novel is a literature composition in which the authors describe the novel with great love and make readers feel emotional. Most love comes fromsincerity, love with honesty, there are different forms and genres of love. Of course, when reading or listening to them, it feels appreciatively and gets great emotion.

**Key words:**

*literature tastes, love, novel*

## 1. ພາກສະເໜີ

ສັງຄົມມະນຸດບໍ່ວ່າໃນຍຸກສະໄໝໃດກໍລ້ວນແຕ່ຕິດພັນກັບວັນນະຄະດີ ແລະຖືເອົາວັນນະຄະດີເປັນຄັງສາງບັນທຶກຂໍ້ມູນກ່ຽວກັບປະສົບການ, ເຫດການ ແລະປະກົດການຕ່າງໆທາງທຳມະຊາດ ແລະສັງຄົມ ເພື່ອສື່ສານຈາກຮຸ່ນຄົນໜຶ່ງສູ່ອີກຮຸ່ນຄົນໜຶ່ງສືບທອດກັນມາ. ວັນນະຄະດີເຫຼົ່ານັ້ນລ້ວນແຕ່ສະທ້ອນໃຫ້ເຫັນເຖິງພູມປັນຍາ ແລະແນວຄິດປະດິດສ້າງອັນສະຫຼາດຫຼັກແຫຼມຂອງປະຊາຊົນບັນດາເຜົ່າກໍຄືຊາວຜູ້ອອກແຮງງານໃນການຖ່າຍທອດວັດທະນະທຳ ແລະພາບວິຖີຊີວິດຂອງຜູ້ຄົນໃນແຕ່ລະສັງຄົມ. ໃນສັງຄົມລາວ,  ວັນນະຄະດີມີບົດບາດ ແລະຄວາມສຳຄັນຢ່າງຍິ່ງຕໍ່ການດຳລົງຊີວິດຂອງປະຊາຊົນລາວແຕ່ໃດໆມາ. ຕະຫຼອດໄລຍະແຫ່ງປະຫວັດສາດຂອງຊາດປະຊາຊົນລາວບັນດາເຜົ່າໄດ້ນຳໃຊ້ວັນນະຄະດີເປັນພາຫະນະເພື່ອສ່ອງແສງຄວາມຫຼາກຫຼາຍຂອງວິຖີຊີວິດ, ຮູບແບບການຕໍ່ສູ້ກັບທຳມະຊາດ ແລະການພົວພັນລະຫວ່າງຊັ້ນຄົນໃນສັງຄົມ ເຊິ່ງມັນໄດ້ກາຍເປັນພື້ນຖານໃຫ້ແກ່ການຄົງຕົວ ແລະຂະຫຍາຍຕົວຂອງວັນນະຄະດີລາວຕັ້ງແຕ່ອະດີດຈົນເຖິງປັດຈຸບັນ .ສະນັ້ນ, ວັນນະຄະດີລາວຈຶ່ງສ່ອງແສງໃຫ້ເຫັນເຖິງພູມປັນຍາຂອງບັນພະບູລຸດລາວໃນການປະດິດຄິດແຕ່ງບົດປະພັນວັນນະຄະດີຕ່າງໆຢ່າງມີສິລະປະ ເພື່ອສະທ້ອນຄວາມອຸດົມສົມບູນ ແລະຄວາມຫຼາກຫຼາຍທາງວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະຮູບແບບການດຳລົງຊີວິດຂອງຄົນລາວໃນສະໄໝບູຮານມາຈົນເຖິງປັດຈຸບັນ.

ໂດຍປົກກະຕິແລ້ວ, ມະນຸດມີຄວາມຈຳເປັນຕ້ອງບໍລິໂພກອາຫານເພື່ອຫຼໍ່ລ້ຽງຮ່າງກາຍໃຫ້ຈະເລີນເຕີບໂຕ ແລະສາມາດເຄື່ອນໄຫວໄປມາໄດ້. ຢ່າງໃດກໍຕາມ, ຍັງມີອີກສິ່ງໜຶ່ງທີ່ຄົນເຮົາຕ້ອງໄດ້ບໍລິໂພກເພື່ອຫຼໍ່ລ້ຽງຈິດໃຈໃຫ້ມີຄວາມເບີກບານມ່ວນຊື່ນນັ້ນແມ່ນວັນນະຄະດີ. ເນື່ອງຈາກວ່າ, ວັນນະຄະດີແມ່ນແຫຼ່ງລວມຂອງອາລົມ ແລະຄວາມຮູ້ສຶກ ທີ່ເກີດຈາກການປະສົມປະສານລະຫວ່າງປະສົບການຕົວຈິງ ແລະຈິນຕະນາການ ໂດຍມີຈຸດປະສົງເພື່ອໃຫ້ຄວາມເພີດເພີນ, ແງ່ຄິດ, ແລະຄວາມຮູ້. ເພາະສະນັ້ນ, ການອ່ານບົດປະພັນວັນນະຄະດີໃດໜຶ່ງ ຍ່ອມກໍ່ໃຫ້ເກີດມີຄວາມບັນເທີງໃນຈິດໃຈຂອງຜູ້ອ່ານໃນລະດັບໃດໜຶ່ງທີ່ແນ່ນອນ. ສິ່ງດັ່ງກ່າວໄດ້ພິສູດໃຫ້ເຫັນວ່າ ວັນນະຄະດີເປັນອາຫານທາງຈິດໃຈ ຢ່າງແທ້ຈິງ.

ຈາກມຸມມອງການເບິ່ງເຫັນວັນນະຄະດີເປັນອາຫານທາງຈິດໃຈ ນຳມາສູ່ການກຳນົດລົດຊາດຕ່າງໆທີ່ຖືກປຸງແຕ່ງຂຶ້ນໃນບົດປະພັນວັນນະຄະດີ ໂດຍສະເພາະແມ່ນລົດແຫ່ງຄວາມຮັກ. ຊຶ່ງແມ່ນອົງປະກອບສຳຄັນທີ່ສຸດຢ່າງໜຶ່ງໃນບົດປະພັນທຸກປະເພດ, ເພາະນອກຈາກຈະຊ່ວຍສ້າງສີສັນບັນຍາກາດເຮັດໃຫ້ບົດປະພັນມີຄວາມໜ້າສົນໃຈເພີ່ມຂຶ້ນແລ້ວ ຍັງສະທ້ອນຄວາມປາຖະໜາອັນແທ້ຈິງຂອງມະນຸດ ທີ່ຍາມໃດກໍໄຝ່ຫາຄວາມຮັກໃນຮູບແບບຕ່າງໆ. ພ້ອມດຽວກັນນີ້, ການນຳໃຊ້ຄວາມຮັກເຂົ້າໃນບົດປະພັນຍັງເປັນການປູກຝັງ ແລະສົ່ງເສີມໃຫ້ສັງຄົມເຫັນຄຸນຄ່າ ແລະຄວາມສຳຄັນຂອງການສະແດງຄວາມຮັກຕໍ່ກັນ ແລະກັນ. ນີ້ເປັນເຫດຜົນທີ່ເຮັດໃຫ້ລົດແຫ່ງຄວາມຮັກປະກົດຕົວໃນບົດວັນນະຄະດີທົ່ວໄປໃນວັນນະຄະດີລາວ.

ມາເຣດ ຊາມາ (Mahesh Sharma, 2014) ອະທິບາຍວ່າ: ລົດວັນນະຄະດີ (ຣະສະ) ເກີດຂຶ້ນຍ້ອນມີແຮງກະຕຸ້ນທີ່ສະສົມໄວ້ ເຊັ່ນ ເມື່ອອ່ານບົດປະພັນໃດໜຶ່ງ ອາດມີເຫດການເຮັດໃຫ້ຜູ້ອ່ານມີຄວາມຮູ້ສຶກຍິນດີ, ໂສກເສົ້າ ຫຼື ຮ້ອງໄຫ້, ສິ່ງເຫຼົ່ານັ້ນໄດ້ເຂົ້າໄປກະຕຸ້ນລະບົບຮ່າງກາຍ ແລະ ຈິດໃຈ ເຊິ່ງສົ່ງຜົນໃຫ້ຜູ້ອ່ານຮູ້ສຶກຄ້ອຍຕາມ ແລະ ສະແດງອາການອອກມາຜ່ານທາງໃບໜ້າຫຼືໃນຮ່າງກາຍ. ມາເຣດ ຊາມາ (Mahesh Sharma, 2014) ສະເໜີຕື່ມອີກວ່າ ລົດແຫ່ງຄວາມຮັກເປັນພາກສ່ວນທີ່ມີຄວາມສຳຄັນທີ່ສຸດໃນບັນດາລັກສະນະຂອງມະນຸດ. ທຸກໆສິ່ງທີ່ໃຫ້ຄວາມມ່ວນຊື່ນ, ຄວາມໜ້າຮັກ ແລະຄວາມຫຼູຫຼາກໍຈະກໍ່ໃຫ້ເກີດອາລົມແຫ່ງຄວາມຮັກ.

ໃນໄລຍະຜ່ານມາກໍມີນັກຄົ້ນຄວ້າຫຼາຍທ່ານທີ່ໄດ້ທຳການຄົ້ນຄວ້າກ່ຽວກັບລົດວັນນະຄະດີເຊັ່ນ ໂຣເບີດ ສເຕີນເບີກ (Robert Sternberg, 1988) ນຳສະເໜີແນວຄິດທິດສະດີສາມຫຼ່ຽມຄວາມຮັກ ເຊິ່ງເປັນການເບິ່ງຄວາມມັກ (Liking) ແລະຄວາມຮັກ (Love) ໃນມູມມອງທີ່ກວ້າງອອກໄປ ແລະອົງປະກອບຄວາມຮັກມີ 3 ມູມ, ໂດຍມູມຍອດເທິງຄືມູມໃກ້ຊິດສະໜິດສະໜົມ ເຊິ່ງໝາຍເຖິງຄວາມຮູ້ສຶກໃນຄວາມສຳພັນທີ່ເຮັດໃຫ້ເກີດຄວາມໃກ້ຊິດ ຫຼືພັນທະຕໍ່ກັນ ແລະການໄດ້ຮັບຄວາມອົບອຸ່ນຕໍ່ກັນ ແລະກັນ. ມູມເບື້ອງຊ້າຍມືໝາຍເຖິງ ປະສົບການຂອງຄວາມຮູ້ທາງອາລົມ ຫຼືຕັນຫາເຊິ່ງຈະນຳໄປສູ່ການດຶງດູດທາງຮູບຮ່າງໜ້າຕາ, ຄວາມສຳພັນທາງເພດ ແລະຄວາມຮັກຫວານສົດຊື່ນ. ສ່ວນມູມເບື້ອງຂວາມືນັ້ນຄື ການຕົກລົງປົງໃຈ ເຊິ່ງໝາຍເຖິງການຕັດສິນໃຈທີ່ຈະຮັກໃຜຜູ້ໜຶ່ງ ແລະຢຶດໝັ້ນທີ່

ຈະຮັກສາຄວາມສຳພັນໄວ້ຕໍ່ໄປ. ຢ່າງໃດກໍດີ, ຄວາມສຳພັນທີ່ເກີດຈາກພຽງ 1 ໃນ 3 ອົງປະກອບຈະມີໂອກາດຄົງຕົວຢູ່ໄດ້ໜ້ອຍກວ່າຄວາມສຳພັນທີ່ເກີດຈາກ 2 ອົງປະກອບຂຶ້ນໄປ. ຈອນ ລີ (John Lee, 1973) ສະເໜີແນວຄິດທິດສະດີກົງລໍ້ສີຄວາມຮັກໄວ້ 6 ປະເພດ ໂດຍໃຊ້ຄຳສັບທີ່ເປັນພາສາເກຣັກຄື ຮັກດ້ວຍນ້ຳຕາ ແລະອາລົມ (Eros), ຮັກແບບສະໜຸກ (Ludus),ຮັກແບບມິດຕະພາບຜູກພັນ (Storge), ຮັກດ້ວຍອາລົມ (Mania), ຮັກດ້ວຍເຫດຜົນ (Pragma), ແລະຮັກເສຍສະລະ (Agape).

ບັນດາບົດຄົ້ນຄວ້າດັ່ງກ່າວມານັ້ນລ້ວນແຕ່ໄດ້ເວົ້າເຖິງລົດຄວາມຮັກໃນວັນນະຄະດີທີ່ມີຫຼາຍແບບແຕກຕ່າງກັນ, ສຳລັບບົດນີ້ແມ່ນຈະທຳການຄົ້ນຄວ້າໃຫ້ເຫັນເຖິງລົດຄວາມຮັກທີ່ນັກຂຽນໄດ້ນຳໃຊ້ເຂົ້າໃນການພັນລະນາບົດນະວະນິຍາຍຂອງຕົນ, ເຊິ່ງຄາດວ່າຈະປາກົດມີຫຼາຍສີສັນທີ່ມີລັກສະນະໂດດເດັ່ນ ໃນບົດນະວະນິຍາຍເລື່ອງນີ້.

ຈາກບັນຫາທີ່ກ່າວມາຂ້າງເທິງກຸ່ມຜູ້ສຶກສາຈຶ່ງມີຄວາມສົນໃຈຄົ້ນຄວ້າລົດວັນນະຄະດີໃນນະວະນິຍາຍ, ໂດຍມີຈຸດປະສົງເພື່ອສຶກສາລົດຄວາມຮັກທີ່ສະແດງອອກຜ່ານນະວະນິຍາຍເລື່ອງ "ພາຍຸຊີວິດ" ຂອງ ດາວເໜືອ.ໂດຍນຳໃຊ້ທິດສະດີຂອງ ມະຫາສິລາ ວິລະວົງ (1996) ເຊິ່ງມີທັງໝົດ 9 ລົດ, ແຕ່ຈະເລືອກນຳໃຊ້ພຽງແຕ່ 1 ລົດເທົ່ານັ້ນຄື ລົດແຫ່ງຄວາມຮັກ, ປະກອບກັບທິດສະດີຂອງ ມາເຮດ ຊາມາ (Mahesh Sharma, 2014) ເພື່ອວິເຄາະ.

## 2. ອຸປະກອນ ແລະວິທີການ

ສຶກສາລົດວັນນະຄະດີໃນນະວະນິຍາຍ "ພາຍຸຊີວິດ" ເປັນການສຶກສາແບບຄຸນນະພາບ ແລະເປັນການສຶກສາຈາກເອກະສານໂດຍກົງ. ດັ່ງນັ້ນ, ຜູ້ສຶກສາຈຶ່ງໄດ້ມີວິທີການດຳເນີນການຄົ້ນຄວ້າດັ່ງນີ້:

### 2.1 ວິທີເກັບກຳຮັບໂຮມຂໍ້ມູນ

ການສຶກສາລົດຄວາມຮັກໃນນະວະນິຍາຍ "ພາຍຸຊີວິດ" ຂອງ ດາວເໜືອຄັ້ງນີ້ຄະນະຜູ້ສຶກສາໄດ້ມີວິທີການເກັບຂໍ້ມູນດັ່ງນີ້:

**ຂັ້ນຕອນທີ 1:** ສຶກສາທິດສະດີກ່ຽວກັບລົດວັນນະຄະດີຕ່າງໆຂອງນັກວັນນຄະດີຢ່າງລະອຽດ.

**ຂັ້ນຕອນທີ 2:** ສຳຫຼວດຂໍ້ມູນໂດຍການອ່ານນະວະນິຍາຍຜ່ານຫຼາຍຮອບ, ຫຼັງຈາກນັ້ນຄະນະຜູ້ສຶກສາໄດ້ອ່ານລະອຽດພ້ອມບັນທຶກເອົາຈຸດທີ່ສະແດງເຖິງລົດຄວາມຮັກຕ່າງໆໃນບົດເລື່ອງອອກມາໄວ້ໃນປຶ້ມບັນທຶກ.

**ຂັ້ນຕອນທີ 3:** ໄຈ້ແຍກລົດຄວາມຮັກຕ່າງໆອອກເປັນປະເພດຕາມຂອບເຂດທີ່ໄດ້ວາງໄວ້ເພື່ອນຳມາຄົ້ນຄວ້າ.

### 2.2 ການວິເຄາະຂໍ້ມູນ

ນຳເອົາຂໍ້ມູນຕ່າງໆທີ່ໄດ້ຈັດໄວ້ນັ້ນແລ້ວນຳມາວິເຄາະແຕ່ລະປະເພດລົດວັນນະຄະດີຕາມຫຼັກທິດສະດີຂອງ ສິລາ ວິລາວົງ (1996) ວ່າດ້ວຍລົດວັນນະຄະດີ, ສ່ວນການວິເຄາະຮູບແບບລົດແຫ່ງຄວາມຮັກແມ່ນອີງໃສ່ທິດສະດີຂອງ ມາເຮດ ຊາມາ (Mahesh Shama, 2014). ດ້ວຍວິທີການອະທິບາຍ, ວິເຄາະ ແລະຕີຄວາມເພື່ອໃຫ້ເຫັນລົດຊາດຢ່າງແທ້ຈິງ.

**ແນະນຳການອ້າງອີງ**

- ສຳລັບການອ້າງອີງຂໍ້ຄວາມກ່ຽວກັບລົດຄວາມຮັກແຕ່ລະແບບຈາກນະວະນິຍາຍນັ້ນ, ກຸ່ມຜູ້ສຶກສາຈະຍົກ ຕົວຢ່າງຂຶ້ນມາວິເຄາະ ພ້ອມທັງອ້າງເລກໜ້າໄວ້ໃນວົງເລັບທ້າຍຂໍ້ຄວາມ.

**ຕົວຢ່າງ:** *"ມີຫຼາຍເທື່ອແມ່ກັບມາແຕ່ໄຮ່ ເພິ່ນເຄີຍເຫັນສອງອ້າຍນ້ອງພວກຂ້ອຍພາກັນຕ່ອຍໝາກບ້າ ຫຼືຂຸດຈີ່ນາຍຢູ່ລຽບແຄມຫວ້ຍນັ້ນ ແມ່ເຄີຍຈົກເອົາໝາກແຕງຂອດ ຫຼືສາລີເຜົາມາຍື່ນໃຫ້ພວກຂ້ອຍ, ແມ່ເຄີຍເວົ້າກັບພວກຂ້ອຍວ່າ: ໜ່ອຍດີໜ່ອຍງາມແພງໄວ້ໃຫ້ມັນໃຫຍ່ຈັ່ງໄດ້ກິນຫຼາຍວ່າຊັ້ນ". (ໜ:2)*

- ໝາຍຄວາມວ່າຂໍ້ຄວາມທີ່ຍົກມານີ້ນຳມາຈາກໜ້າ 2 ໃນປຶ້ມນະວະນິຍາຍ "ພາຍຸຊີວິດ".

## 3. ຜົນໄດ້ຮັບ

ລົດຂອງວັນນະຄະດີໝາຍເຖິງຄວາມຮູ້ສຶກມັກ, ພໍໃຈໃນຄວາມງາມ ຫຼືສຸນທະລີຍະພາບໃນງານຂຽນ ໂດຍຜ່ານພາສາ. ດ້ວຍເຫດນີ້, ວັນນະຄະດີເລື່ອງໃດຈະມີລົດດີ ຫຼື ບໍ່ດີຍ່ອມຂຶ້ນຢູ່ກັບພາສາທີ່ສະແດງອອກເປັນສຳຄັນ ເພາະພາສາເປັນຕົວບອກລົດວັນນະຄະດີ. ລົດຄວາມຮັກໃນວັນນະຄະດີມີຫຼາຍແບບ ແຕ່ທີ່ເຫັນປາກົດອອກໃນນະວະນິຍາຍ "ພາຍຸຊີວິດ" ຂອງ ດາວເໜືອມີດັ່ງນີ້:

### 3.1 ລົດແຫ່ງຄວາມຮັກລະຫວ່າງສະມາຊິກໃນຄອບຄົວ

ຄອບຄົວແມ່ນຫົວໜ່ວຍຈັດຕັ້ງພື້ນຖານຂອງສັງຄົມ, ໃນຄອບຄົວໜຶ່ງໆຈະປະກອບມີສະມາຊິກຫຼາຍຄົນເປັນຕົ້ນແມ່ນ ພໍ່, ແມ່, ລູກ, ພໍ່ເຖົ້າ-ແມ່ເຖົ້າ, ຫຼານ ...ບຸກຄົນເຫຼົ່ານີ້ປະກອບເຂົ້າຈຶ່ງກາຍເປັນຄອບຄົວໄດ້. ພວກເຂົາໄດ້ສະໜິດຕິດພັນ ແລະມີຄວາມຮັກກັນເລິກເຊິ່ງຢ່າງຫາສິ່ງປຽບປານບໍ່ໄດ້. ໃນບົດວັນນະຄະດີກໍໄດ້ພັນລະນາຄວາມຮັກຕ່າງໆເຫຼົ່ານັ້ນດ້ວຍຫຼາຍຮູບ ,ຫຼາຍແບບ, ຫຼາຍສາຍພົວພັນຕ່າງໆ. ດັ່ງໃນເລື່ອງ "ພາຍຸຊີວິດ" ຂອງ ດາວເໜືອ ກໍປາກົດເຫັນຄວາມຮັກໃນຄອບຄົວຫຼາຍແບບເຊັ່ນ:

**ຄວາມຮັກຂອງພໍ່ແມ່ຕໍ່ລູກ**

ຄວາມຮັກຂອງພໍ່ແມ່ທີ່ມີຕໍ່ກັບລູກໆໃນບົດວັນນະຄະດີກໍສະແດງອອກດັ່ງດຽວກັນກັບຄວາມຮັກຂອງພໍ່ແມ່ທີ່ມີຕໍ່ລູກໃນສັງຄົມທົ່ວໄປ. ພໍ່ແມ່ແມ່ນຮັກລູກເໜືອກວ່າສິ່ງໃດໆ, ພໍ່ແມ່ຍອມອົດເພື່ອໃຫ້ລູກໄດ້ອີ່ມ, ທົນໜາວເພື່ອໃຫ້ລູກໄດ້ອຸ່ນ, ຮັກລູກປຽບເໝືອນແກ້ວຕາດວງໃຈ ເພາະລູກຄືແກ້ວດວງປະເສີດຂອງພໍ່ແມ່. ສິ່ງເຫຼົ່ານີ້ນັກຂຽນໄດ້ພັນລະນາອອກໃນບົດວັນນະຄະດີ. ດັ່ງທີ່ເຫັນໃນເລື່ອງ "ພາຍຸຊີວິດ" ເຊິ່ງໄດ້ສະແດງອອກບາງຕອນທີ່ວ່າ:

*"ມີຫຼາຍເທື່ອແມ່ກັບມາແຕ່ໄຮ່ ເພິ່ນເຄີຍເຫັນສອງອ້າຍນ້ອງພວກຂ້ອຍພາກັນຕ່ອຍໝາກບ້າ ຫຼືຂຸດຈີ່ນາຍຢູ່ລຽບແຄມຫວ້ຍນັ້ນ ແມ່ເຄີຍຈົກເອົາໝາກແຕງຂອດ ຫຼືສາລີເຜົາມາຍື່ນໃຫ້ພວກຂ້ອຍ, ແມ່ເຄີຍເວົ້າກັບພວກຂ້ອຍວ່າ: ໜ່ອຍດີໜ່ອຍງາມແພງໄວ້ໃຫ້ມັນໃຫຍ່ຈັ່ງໄດ້ກິນຫຼາຍວ່າຊັ້ນ". (ໜ: 2)*

ຈາກຕົວຢ່າງຂ້າງເທິງນັກຂຽນໄດ້ພະຍາຍາມສື່ໃຫ້ຜູ້ອ່ານໄດ້ເຫັນເຖິງຄວາມຮັກຂອງແມ່ທີ່ມີຕໍ່ລູກຢ່າງມະຫາສານແມ່ນຈະໄປທາງໃດມາພໍ່ແມ່ກໍຕ້ອງຄິດຫ່ວງຫາລູກສະເໝີ, ພໍ່ແມ່ພະຍາຍາມຊອກຫາຂອງຕ້ອນຂອງຝາກເພື່ອທະນຸຖະໜອມມາຕ້ອນລູກ. ໝາກແຕງຂອດ, ສາລີເຜົາ ແມ່ນອາຫານການກິນພື້ນບ້ານ, ນັກຂຽນໄດ້ຍົກເອົາສິ່ງນັ້ນມາເປັນຕົວແທນໃຫ້ແກ່ຄວາມຮັກຂອງຜູ້ເປັນແມ່ທີ່ມີຕໍ່ລູກ, ແມ່ຍັງເວົ້າວ່າ: "ໜ່ອຍດີ ໜ່ອຍງາມແພງໄວ້ໃຫ້ມັນໃຫຍ່ຈັ່ງໄດ້ກິນຫຼາຍວ່າຊັ້ນ" ນີ້ກໍໄດ້ບອກໃຫ້ຮູ້ວ່າຄວາມຮັກຂອງແມ່ແມ່ນມະຫາສານຖ້າເອົາໄວ້ໃຫ້ມັນໃຫຍ່ກໍຈະເຮັດໃຫ້ລູກໄດ້ກິນອີ່ມກິນເຕັມ ເຊິ່ງແມ່ນຄວາມຕ້ອງການຂອງຜູ້ເປັນແມ່. ໃນປະໂຫຍກຂ້າງເທິງເມື່ອເຮົາອ່ານແລ້ວຈຶ່ງເຮັດໃຫ້ຜູ້ອ່ານເກີດມີຄວາມຮູ້ສຶກຍິນດີ ແລະຊາບຊຶ້ງກັບຄວາມຮັກຂອງແມ່ທີ່ມີຕໍ່ລູກ. ການລ້ຽງດູລູກພໍ່ແມ່ຍັງໄດ້ທົນທຸກທໍລະມານຢ່າງຫາອັນປຽບບໍ່ໄດ້ເພື່ອໃຫ້ລູກເຕີບໃຫຍ່ ,ໝົດຫຼາຍຫົວປາ, ຫຼາຍຂາໄກ່, ຊອກຫາທຸກສິ່ງທຸກຢ່າງເພື່ອໃຫ້ລູກໄດ້ກິນອີ່ມນອນຫຼັບເຖິງແມ່ນພໍ່ແມ່ຈະຕົກທຸກທໍລະມານປານໃດກໍຕາມດັ່ງບາງຕອນກ່າວວ່າ:

*"ຂ້ອຍໄດ້ເຫັນວ່າ ສາຍໃຈຂອງຜູ້ເປັນແມ່ທີ່ມີຕໍ່ພວກຂ້ອຍແມ່ນໜັກເກົ່າຫີນກ້ອນລ້ານອີ່ຫຼີ, ແສນຫົວປາແສນຂາໄກ່ທີ່ພໍ່ແມ່ຫາລ້ຽງພວກຂ້ອຍຈົນໃຫຍ່ກ້າໜ້າບານມາປານນີ້ຍັງບໍ່ພໍ ເພິ່ນຍັງຕ້ອງຂຸດຫົວເລົາເກົາຫົວຫຍ້າຫາເຜືອກຫາມັນ ແລະໝາກໄມ້ໝາກຕອກມາລ້ຽງພວກຂ້ອຍອີກ, ຊີວິດຂອງເພິ່ນໄດ້ເປັນແນວນັ້ນຕັ້ງແຕ່ມື້ຂ້ອຍມືນຕາເຫັນຟ້າພຸ້ນມາ." (ໜ:2-3)*

ຈາກຕົວຢ່າງນີ້ ດາວເໜືອ ໄດ້ພະຍາຍາມຍົກເອົາ ຫີນກ້ອນລ້ານ, ຫົວປາ, ຂາໄກ່, ເລົາ, ຫຍ້າ, ເຜືອກ, ມັນ, ໝາກໄມ້. ມາເປັນສິ່ງທີ່ປຽບທຽບກັບຄວາມຮັກອັນມະຫາສານຂອງແມ່, ຄວາມຮັກຂອງແມ່ແມ່ນຈະເອົາຫີນຫີນກ້ອນລ້ານມາຊັ່ງຊາກໍບໍ່ເທົ່າເລີຍ, ແສນຫົວປາ ຂາໄກ່, ແມ່ຂຸດຫົວເລົາເກົາຫົວຫຍ້າສິ່ງເຫຼົ່ານີ້ລ້ວນແຕ່ສື່ໃຫ້ເຫັນເຖິງຄວາມຮັກຂອງພໍ່ແມ່ທີ່ມີຕໍ່ລູກ, ແມ່ຍອມທຳທຸກຢ່າງເພື່ອລູກມີສິ່ງໃດແຊບ, ສິ່ງໃດດີ, ງາມ ພໍ່ແມ່ລ້ວນແຕ່ທະນຸຖະໜອມໃຫ້ລູກທັງນັ້ນ, ແຕ່ກ່ອນຈະໄດ້ສິ່ງເຫຼົ່ານັ້ນມາພໍ່ແມ່ຕ້ອງໄດ້ທົນທຸກທໍລະມານ. ເມື່ອເຮົາອ່ານໃນຕອນນີ້ຈຶ່ງເຮັດໃຫ້ເຮົາເກີດອາລົມຄວາມຮູ້ສຶກປາບປື້ມກັບຄວາມຮັກຂອງຜູ້ເປັນແມ່ ແລະຍິ່ງໃຫຍ່ອີ່ຫຼີ ດັ່ງ:

*"ຄຳເກົ່າ ລູກຊາຍຂອງພໍ່ !ພໍ່ ແລະນ້ອງສາວຂອງເຈົ້າຮູ້ສຶກດີໃຈຫຼາຍທີ່ໄດ້ຮູ້ຂ່າວວ່າ ລູກຍັງມີຊີວິດຢູ່, ຄວາມຈິງພໍ່ຄອນລົງມາຢາມລູກ, ແຕ່ວ່າເຖົ້າແກ່ຫຼາຍແລ້ວ, ດ້ານໜຶ່ງເງິນຄຳທີ່ຈະຈ້າງລົດເພື່ອລົງມາຫາລູກນັ້ນກໍບໍ່ມີ, ຂໍໃຫ້ລູກຈົ່ງເຫັນໃຈ ...ປັດຈຸບັນນີ້ ຢູ່ເຮືອນເຮົາມີແຕ່ພໍ່ ກັບພໍ່ຊຽງບຸນມີ ເວົ້າເຖິງການກິນຢູ່ກໍຄ່ອຍມີໄປຕາມມີຕາມເກີດ ແຕ່ຂໍລູກຢ່າໄດ້ເປັນຫ່ວງນຳພໍ່ເລີຍ ພໍ່ຈະທົນຢູ່ຈົນກວ່າລູກກັບຄືນ." (ໜ: 91)*

ຈາກຕົວຢ່າງຂ້າງເທິງ ນັກຂຽນຍັງໄດ້ພະຍາຍາມພັນລະນາໃຫ້ຜູ້ອ່ານໄດ້ຊຶມເລິກເຂົ້າເຖິງລົດຄວາມຮັກຂອງພໍ່ຕໍ່ລູກຢ່າງແທ້ຈິງ, ຍາມໃດພໍ່ກໍສູ້ເພື່ອລູກ, ນານປານໃດພໍ່ກໍລໍຖ້າເພື່ອໃຫ້ເຫັນໜ້າລູກ, ນີ້ແມ່ນຄວາມຮັກຢ່າງແທ້ຈິງຈາກໃຈຈິງຂອງຫົວອົກຜູ້ເປັນພໍ່, ຈາກຂໍ້ຄວາມຕອນນີ້ໄດ້ເຮັດໃຫ້ຜູ້ອ່ານມີຄວາມຮູ້ສຶກຊາບຊຶ້ງໄປກັບຄວາມຮັກອະມະຕະຂອງພໍ່ຕໍ່ລູກນີ້ໄປໄດ້. ນັກຂຽນມີຄວາມສາມາດໃນການພັນລະນາລົດຄວາມຮັກນີ້ໄດ້ຢ່າງກົມໃຈ.

**ຄວາມຮັກຂອງລູກຕໍ່ພໍ່ແມ່**

ລູກເຕີບໃຫຍ່ຂຶ້ນມາໄດ້ຍ້ອນການໃຫ້ກຳເນີດຊີວິດຂອງພໍ່ແມ່ ໂດຍຜ່ານການລ້ຽງດູ, ດັ່ງນັ້ນ, ລູກຈຶ່ງຕ້ອງມີຄວາມຮັກຕໍ່ພໍ່ແມ່ນັ້ນມັນເປັນເລື່ອງທີ່ແນ່ນອນ. ດັ່ງບູຮານລາວເຄີຍເວົ້າເປັນຄຳສອນໄວ້ວ່າ "ຄຸນພໍ່ທໍ່ພູເຂົາກ້າຄຸນແມ່ທໍ່ຟ້າກັບແຜ່ນດິນ". ໃນບົດປະພັນວັນນະຄະດີນັກຂຽນກໍພະຍາຍາມຍົກເອົາຄວາມຮັກດັ່ງກ່າວນີ້ມາສະແດງອອກໃນເລື່ອງເພື່ອໃຫ້ຜູ້ອ່ານໄດ້ຮັບລົດຄວາມຮັກດັ່ງກ່າວ.

ນະວະນິຍາຍ "ພາຍຸຊີວິດ" ນັກຂຽນໄດ້ພັນລະນາໃຫ້ເຫັນເຖິງຄວາມຮັກຂອງລູກທີ່ມີຕໍ່ພໍ່ແມ່ໃນຫຼາຍຕອນເຊັ່ນ:

*"ຮຸ່ງເຊົ້າມື້ຕໍ່ມາ ເຖິງແມ່ນຂ້ອຍຈ່ອງນອນຈົນໝົດຄືນແລ້ວກໍຕາມ ແຕ່ຂ້ອຍກໍພະຍາຍາມລຸກອ່າວເດີກ ເພື່ອໄປຢາມຕຸ້ມພໍໄດ້ປາດຸກ ຫຼືປາເຊືອມຈັກສອງສາມໂຕມາປີ້ງເຮັດງາຍໃຫ້ແມ່ ...ປາດຸກສອງໂຕບັກໃຫຍ່ ຂ້ອຍລັກໝາຍໃນໃຈວ່າ ຈະປີ້ງໃຫ້ເຫຼືອງເອີ່ມເຕີ່ມໃສ່ປັ້ນເຂົ້າໃຫ້ອີ່ແມ່." (ໜ: 5-6)*

ໃນຕົວຢ່າງນີ້ໄດ້ສະແດງເຖິງຄວາມຮັກ ,ຄວາມຮູ້ບຸນຄຸນຕໍ່ພໍ່ແມ່ຜູ້ບັງເກີດຂອງລູກ ,ປາດຸກ ແລະປາເຊືອມເປັນຍອດອາຫານຂອງມະນຸດ, ເປັນປາທີ່ຫາຍາກ ແຕ່ແຊບທີ່ສຸດ, ຍ້ອນແນວນັ້ນໃນຄວາມຮູ້ສຶກຂັ້ນຕົ້ນຂອງຄວາມຮັກທີ່ມີຕໍ່ພໍ່ແມ່ ລູກຈິ່ງຢາກໄດ້ສິ່ງນີ້ມາໃຫ້ແມ່ຂອງຕົນໄດ້ກິນ, ຖ້າແມ່ໄດ້ກິນສິ່ງທີ່ແຊບກໍຈະເຮັດໃຫ້ແມ່ທີ່ນອນປ່ວຍຢູ່ນັ້ນຢູ່ດີມີແຮງ, ຫາຍພະຍາດໂລຄາ. ຈາກຄວາມຮັກອັນແຮງກ້າໃນຈິດໃຈຂອງລູກນັກຂຽນໄດ້ບັນລະຍາຍໃຫ້ເຫັນເຖິງແນວຄວາມຄິດຂອງລູກເຖິງແມ່ນຕົນເອງຈະອຶດຫຼັບອຶດນອນປານໃດກໍຕາມ, ແຕ່ຍ້ອນຄວາມຮັກທີ່ມີຕໍ່ແມ່ແລ້ວ ລູກກໍໄດ້ອົດທົນເພື່ອໃຫ້ແມ່ໄດ້ຢູ່ໄດ້ກິນ, ເຊິ່ງແມ່ນວິທີການຕອບບຸນແທນຄຸນຢ່າງໜຶ່ງທີ່ໜ້າສັນລະເສີນຂອງລູກ, ພໍເຮັດສິ່ງໃດໄດ້ກໍເຮັດຕາມຄວາມສາມາດຂອງຕົນເອງ. ຈາກຂໍ້ຄວາມຂ້າງເທິງນີ້ໄດ້ເຮັດໃຫ້ຜູ້ອ່ານໄດ້ຮັບຄວາມຊາບຊຶ້ງກັບລິດຄວາມຮັກຂອງລູກທີ່ມີຕໍ່ພໍ່ແມ່.

ຄວາມຮັກຂອງລູກທີ່ມີຕໍ່ພໍ່ແມ່ນັ້ນກໍຍິ່ງໃຫຍ່ເຫຼືອຄະນາເຊັ່ນກັນ, ລູກກໍ່ຈະຍອມທຳທຸກສິ່ງທຸກຢ່າງເພື່ອແທນຄຸນພໍ່ແມ່ໃຫ້ໄດ້. ດັ່ງສະແດງອອກບາງຕອນວ່າ:

*"ຂ້ອຍຮູ້ສຶກອັດສະຈັນໝາກຫົວໃຈຂອງລູກກໍາພ້າຜູ້ໜຶ່ງຄືຂ້ອຍ ທີ່ກ້າເອົາຊີວິດຂອງຕົນເຂົ້າໄປສ່ຽງຕໍ່ຄວາມເຈັບຄວາມຕາຍ ແລະຄວາມເຈັບຊໍ້າໄດ້ແນວນັ້ນ ທັງກ້າຄິດວ່າ ຈະແກ້ມືກັບອີ່ຕາຈາງວາງແນວນັ້ນອີກ. ຄັນຖ້າຂ້ອຍຫາກບໍ່ຄິດວ່າ ມັນເປັນການທົນທຸກເພື່ອແທນຄຸນແມ່ຜູ້ທີ່ໄດ້ລ່ວງລັບໄປແລ້ວນັ້ນ ຂ້ອຍກໍພໍມີໂອກາດຫຼິ້ນງານກັບອີ່ຕາຈາງວາງດ້ວຍມັດຮ້ອນໆໄດ້ຄືກັນ." (ໜ:23)*

ຈາກຕົວຢ່າງຂ້າງເທິງ ນັກຂຽນໄດ້ພະຍາຍາມສື່ຄວາມໝາຍໃຫ້ເຮົາເຫັນເຖິງຄວາມຮັກຂອງລູກທີ່ມີຕໍ່ພໍ່ແມ່ເພື່ອຕອບບຸນແທນຄຸນຄື ການເອົາຊີວິດຂອງຕົນເອງເຂົ້າໄປສ່ຽງໄພຕໍ່ຄວາມອັນຕະລາຍນັ້ນແມ່ນຄວາມຕັດສິນໃຈອັນສູງສົ່ງ ໝາຍວ່າເຖິງຈະຕາຍລູກກໍຍອມເພື່ອທົດແທນບຸນຄຸນຜູ້ບັງເກີດ. ດັ່ງນັ້ນ ຕົວລະຄອນຂ້ອຍແມ່ນລູກກະຕັນຍູກະຕະເວທີ. ຈາກຕົວຢ່າງນີ້ນັກຂຽນສາມາດນໍາພາຜູ້ອ່ານສື່ເຂົ້າເຖິງລິດຊາດຂອງຄວາມຮັກທີ່ລູກມີຕໍ່ພໍ່ແມ່ໄດ້, ນັກຂຽນສ້າງລິດຊາດນີ້ຂຶ້ນມາເຮັດໃຫ້ບົດເລື່ອງຍິ່ງໄດ້ຮັບອັດຖະລົດຂອງຄວາມຮັກຫຼາຍຂຶ້ນດັ່ງ:

*"ຂ້ອຍເບິ່ງໃຫ້ຄັກໆອີກ ຫົວໃຈຂ້ອຍເກີດສະທົກສະທ້ານຂຶ້ນມາຢ່າງກະຕຸ້ນໄວ້ບໍ່ໄດ້.*

*-ພໍ່ຂ້ອຍ ... ໂທ ...ພໍ່ຂ້ອຍຊ່າງມາຕົກຢູ່ນີ້ !ຂ້ອຍລົ້ມລົງໃສ່ເອິກພໍ່ເໝືອນຄົນເປັນລົມ ທົ່ວຮ່າງກາຍຂອງຂ້ອຍປາກົດຮ້ອນວຸບວາບ ຂ້ອຍກອດຄີງອັນຈ່ອຍຜອມຂອງພໍ່ໄວ້ແໜ້ນ ທັງປຸກພໍ່ດ້ວຍສຽງສະອື້ນ." (ໜ: 151)*

ຈາກຕົວຢ່າງນີ້ ແມ່ນອີກລົດຄວາມຮັກຂອງຕອນໜຶ່ງທີ່ນັກຂຽນໄດ້ພັນລະນາໄວ້ເຖິງຄວາມຮັກຂອງລູກທີ່ມີຕໍ່ພໍ່ແມ່, ເມື່ອພໍ່ແມ່ປະສົບບັນຫາ ຫຼື ເຈັບໄຂ້ໄດ້ປ່ວຍລູກກໍຍິ່ງໄດ້ຮັບຄວາມທຸກໂສກ, ເສຍໃຈ ແລະເຮັດທຸກສິ່ງຢ່າງເພື່ອເຮັດແນວໃດໃຫ້ພໍ່ແມ່ຫາຍຈາກບັນຫາດັ່ງກ່າວ. ຄວາມຮັກອັນນີ້ແມ່ນຄວາມຮັກທີ່ງົດງາມ, ແມ່ນຄວາມກະຕັນຍູກະຕະເວທີຂອງລູກໆທີ່ມີຕໍ່ພໍ່ແມ່, ເມື່ອເຮົາໄດ້ອ່ານກໍໄດ້ສ້າງຄວາມສະທົກສະທ້ານໃຈ ພ້ອມທັງເກີດຄວາມສະດຸ້ງໃຈໃຫ້ແກ່ຜູ້ອ່ານຕໍ່ກັບຄວາມຮັກຂອງລູກທີ່ມີຕໍ່ພໍ່ແມ່, ທັງແມ່ນສີລະປະການສ້າງລົດວັນນະຄະດີຂອງນັກຂຽນທີ່ສະທ້ອນອາລົມແກ່ຜູ້ອ່ານໄດ້.

**ຄວາມຮັກຂອງອ້າຍນ້ອງຮ່ວມອຸທອນ**

ຄວາມຮັກຂອງອ້າຍນ້ອງຮ່ວມອຸທອນດຽວກັນ ແມ່ນຄວາມຮັກທີ່ເໜືອກວ່າສິ່ງໃດ, ບໍ່ມີວັນຈືດຈາງ ແລະກໍເປັນຄວາມຮັກແບບພິເສດທີ່ແຕກຕ່າງຈາກຄວາມຮັກບ່າວ-ສາວທົ່ວໄປ, ເປັນຄວາມຮັກໜຶ່ງທີ່ຍິ່ງໃຫຍ່ໃນຄອບຄົວ, ເພາະອ້າຍນ້ອງແມ່ນສາຍເລືອດດຽວກັນ. ດັ່ງນັ້ນ, ຄວາມຮັກນີ້ຈິ່ງກາຍເປັນລົດວັນນະຄະດີໄດ້ ແລະປາກົດມີໃນບົດວັນນະຄະດີ. ໃນນະວະນິຍາຍ "ພາຍຸຊີວິດ" ນັກຂຽນກໍໄດ້ເອົາໃຈໃສ່ພັນລະນາຄວາມຮັກແບບອ້າຍນ້ອງຢ່າງແນບນຽນ ແລະສະແດງອອກໃນຫຼາຍຕອນດັ່ງນີ້:

*"ອາຫານແລງຄາບນັ້ນໄດ້ເປັນໄປຕາມອາດຕາມເຊີງ ແລະມັນກໍມີຂຶ້ນພາຍໃຕ້ຢາດນໍ້າຕາແຫ່ງຄວາມອາໄລອາວອນຂອງສາມພໍ່ລູກພວກຂ້ອຍ ,ອີ່ເພັງໄດ້ຮູ້ເລື່ອງນັ້ນຈາກສຽງໄຫ້ສະອຶກສະອື້ນແລະສຽງຄໍ່າຄວນທີ່ພຶມພໍາຂອງຜູ້ເປັນພໍ່ ມັນບໍ່ຍອມປະຂ້າງວາງແອວຂ້ອຍຕັ້ງແຕ່ອີ່ຕາຈາງວາງລົງເຮືອນໄປ, ມັນກອດແຂນຂ້ອຍພ້ອມເມາະຫົວມາໃສ່ເອິກຂ້ອຍ, ມັນຖາມວ່າ: ອ້າຍເກັ່ງ*

*-ອ້າຍໄປຢູ່ນໍາອີ່ຕາຈາງວາງແລ້ວ ອ້າຍກໍຊິມາຫຼິ້ນນໍານ້ອງແດ່ຫວາ?" (ໜ:16)*

ຈາກຕົວຢ່າງຂ້າງເທິງ ນັກຂຽນໄດ້ພັນລະນາຢ່າງເປີດແປນໃນຄວາມຮັກຂອງສາມພໍ່ລູກທີ່ເຄີຍດຳລົງຊີວິດຮ່ວມກັນມາແຕ່ດົນນານ, ເມື່ອໃຜຜູ້ໜຶ່ງທີ່ເປັນສະມາຊິກໃນຄອບຄົວຈະໄດ້ຈາກໄປເພື່ອຮັບຕຳແໜ່ງໜ້າທີ່ຄົນໃຊ້ຈຶ່ງຕ້ອງເຮັດໃຫ້ຄວາມຮັກໃນຄອບຄົວເພີ່ມທະວີຂຶ້ນ. ໂດຍສະເພາະຢ່າງຍິ່ງແມ່ນຄວາມຮັກຂອງສອງອ້າຍນ້ອງຮ່ວມອຸທອນກັນມາແຕ່ຄາວຍັງນ້ອຍແມ່ນຍິ່ງເພີ່ມທະວີຂຶ້ນ, *"ອາຫານແລງຄາບນັ້ນໄດ້ເປັນໄປຕາມອາດຕາມເຊີງ ແລະມັນກໍມີຂຶ້ນພາຍໃຕ້ຢາດນ້ຳຕາແຫ່ງຄວາມອາໄລອາວອນ"* ເປັນສິ່ງທີ່ຢັ້ງຢືນເຖິງລົດຊາດຂອງຄວາມຮັກອັນແທ້ຈິງ, ຄຳຖາມທີ່ວ່າ *"ອ້າຍໄປຢູ່ນຳອີ່ຕາຈາງວາງແລ້ວ ອ້າຍກໍຊິມາຫຼິ້ນນຳນ້ອງແດ່ຫວາ?"* ແມ່ນຄຳຖາມທີ່ເກີດຈາກການກັ່ນຕອງອອກຈາກໃຈຈິງຂອງນ້ອງສາວດ້ວຍຄວາມຮັກ ແລະຫ່ວງຫາອ້າຍ ສິ່ງເຫຼົ່ານີ້ໄດ້ກະທົບເຖິງຈິດໃຈຂອງຜູ້ອ່ານແລ້ວເກີດມີຄວາມຮູ້ສຶກສົງສານໃນຄວາມຮັກຂອງອ້າຍນ້ອງເຂົາເຈົ້າອີ່ຫຼີ. ເຮັດໃຫ້ລົດຄວາມຮັກນີ້ຊຶມເລິກເຂົ້າເຖິງຜູ້ອ່ານດັ່ງ:

*"ລົດອັນຝາດຂົມຂອງອາຫານຄາບນັ້ນເຮັດໃຫ້ຂ້ອຍກືນຝືດທຸກຄຳ ຕະຫຼອດຮອດຕ່ອນປາດຸກ ແລະປາເຊືອມທີ່ນ້ອງສາວຂອງຂ້ອຍຢິບອອກມາປັນໃຫ້ ຂ້ອຍກໍບໍ່ຢາກຈັບມັນມາໃສ່ປາກ. ຕາມທຳມະດາ ກ່ອນນີ້ຂ້ອຍທັງກິນຄຳບັກໃຫຍ່ທັງເຢີ້ຍມັນ. ແຕ່ມື້ນີ້ບໍ່ສະເພາະແຕ່ຂ້ອຍບໍ່ກ້າເຢີ້ຍ ຫຼືຍາດກິນນຳມັນ, ເຖິງຂັ້ນວ່າຕ່ອນປາທີ່ມັນຢິບອອກມາປັນໃຫ້ຂ້ອຍ ຂ້ອຍກືນບໍ່ລົງຊ້ຳອີກ."* *(ໜ:17)*

ຈາກຕົວຢ່າງຂ້າງເທິງເຫັນວ່າຄວາມຮັກຂອງອ້າຍ-ນ້ອງຍິ່ງໃຫຍ່ກວ່າສິ່ງໃດແທ້ໆ ບໍ່ແມ່ນຂ້ອຍບໍ່ຢາກຕ່ອນປາ, ແຕ່ຂ້ອຍກືນບໍ່ລົງຍ້ອນຄວາມຮັກທີ່ບໍ່ຢາກຈາກນ້ອງໄປເພາະນ້ອງສາວຄືສາຍໃຈຂອງຂ້ອຍ. ນັກຂຽນໄດ້ໃຊ້ຄຳວ່າ *"ລົດອັນຝາດຂົມຂອງອາຫານຄາບນັ້ນເຮັດໃຫ້ຂ້ອຍກືນຝືດທຸກຄຳ"* ນີ້ມັນບໍ່ແມ່ນອາຫານເປັນຜິດ, ແຕ່ຫາກແມ່ນຍ້ອນຄວາມຮັກທີ່ມີຕໍ່ນ້ອງ, ຍ້ອນຄວາມຫ່ວງໄຍທີ່ບໍ່ຢາກຈາກນ້ອງໄປສິ່ງເຫຼົ່ານີ້ໄດ້ຖືກແທນທີ່ໃຫ້ກັບລົດຊາດຂອງອາຫານ, ເປັນການສ້າງພາບພົບຂອງລົດຄວາມຮັກໃຫ້ແກ່ຜູ້ອ່ານໄດ້ເຫັນ. ບູຮານລາວຍັງເຄີຍກ່າວໄວ້ວ່າ: "ອ້າຍນ້ອງຮ້າຍກອງຂີ້ບໍ່ເໝັນ ຜົວເມຍຮ້າຍຢາມດຽວເປັນຄົນອື່ນ" ອັນໄດ້ເປັນຄະຕິໃຫ້ເຮົາຮູ້ວ່າຄວາມຮັກຂອງອ້າຍນ້ອງຮ່ວມອຸທອນເປັນຄວາມຮັກທີ່ບໍ່ສາມາດຕັດຂາດຈາກກັນໄດ້, ແມ່ນຈະຕົກຢູ່ຟາກຟ້າ ຫຼືຊົ່ວຮ້າຍແນວໃດກໍຍັງເປັນສາຍເລືອດອ້າຍນ້ອງດຽວກັນ. ຈາກຂໍ້ຄວາມໃນຕອນນີ້ນັກຂຽນເຮັດໃຫ້ຜູ້ອ່ານສາມາດເກີດລົດຄວາມຮັກດ້ວຍການເອົາລົດອາຫານມາທຽບກັບລົດຂອງຄວາມຮັກຂອງສອງອ້າຍນ້ອງໄດ້ຢ່າງມີລົດຊາດ.

ລົດຄວາມຮັກຂອງອ້າຍນ້ອງໃນ "ພາຍຸຊີວິດ" ຂອງນັກຂຽນແຕ່ລະຕອນກໍລ້ວນແຕ່ສ້າງຄວາມປະທັບໃຈໃຫ້ແກ່ຜູ້ອ່ານໄດ້ດີ ແລະຍັງສະແດງອອກຫຼາຍຕອນດັ່ງ:

*-"ອ້າຍເກັ່ງ, ອ້າຍຕັ້ງສະຕິໄດ້ແລ້ວຫວາ; ອ້າຍຈື່ນ້ອງໄດ້ບໍ?*

*-ອ້າຍເກັ່ງ! ອ້າຍບໍ່ຮູ້ເມື່ອຄືງມາໄດ້ສອງມື້ປາຍແລ້ວເດ! ອ້າຍຕົກກົກໄມ້ແຕ່ຕອນສວາຍວານນີ້ພຸ້ນ, ໄທບ້ານ ໄທເມືອງໄປຫາມເອົາອ້າຍມາ, ດຽວນີ້ແຄ່ງເບື້ອງຊ້າຍຂອງອ້າຍຫັກທົບໄປທົບມາທາງໃດກໍໄດ້, ແຕ່ອີ່ລຸງໄດ້ເອົາຮາກຢາມາໃສ່ ແລະເພິ່ນກໍໄດ້ທັກແຊກທາມໃສ່ໃຫ້ອ້າຍ, ອ້າຍຢ່າຍໍມັນໃດ ມັນຊິຫຼຸດກັນອີກໃດ.!" (ໜ:31)*

ຈາກຕົວຢ່າງຂ້າງເທິງນັກຂຽນຢາກອະທິບາຍອີກວ່າ ຜ່ານຄຳເວົ້າຂອງນ້ອງສາວເຮັດໃຫ້ຜູ້ອ່ານເກີດມີຄວາມຮູ້ສຶກພໍໃຈ ແລະກິນໃຈກັບຄວາມຮັກຂອງສອງອ້າຍນ້ອງ ,ນັກແຕ່ງເອົາຄວາມໃກ້ສິດເບິ່ງແຍງຂອງນ້ອງສາວແທນໃຫ້ກັບລົດຄວາມຮັກທີ່ຫຍິ່ງໃຫຍ່ທີ່ມີຕໍ່ອ້າຍ, ຄວາມຮັກຂອງອ້າຍນ້ອງຮ່ວມອຸທອນດຽວກັນມັນເປັນຄວາມຮັກທີ່ມີມາຈາກສາຍເລືອດ, ບໍ່ສະເພາະແຕ່ຮັກໃນໃນຍາມສຸກ ຫຼືຮັ່ງມີເທົ່ານັ້ນ, ແຕ່ເມື່ອຍາມທຸກຈົນ, ເຈັບເປັນຍິ່ງຕ້ອງການເຫັນຄວາມຮັກຂອງອ້າຍນ້ອງຫຼາຍຂຶ້ນ, ເພື່ອຊ່ວຍເຫຼືອ, ໃຫ້ກຳລັງໃຈກັນ, ຈະຕ້ອງຊ່ວຍເຫຼືອກັນທຸກຍາມທີ່ມີຄວາມຈຳເປັນ, ການພັນລະນາແບບນີ້ໄດ້ກາຍເປັນແຮງກະຕຸ້ນໃຫ້ຜູ້ອ່ານເກີດຄວາມຍິນດີກັບຄວາມຮັກທີ່ຍິ່ງໃຫຍ່ຂອງສອງອ້າຍນ້ອງໄດ້.

### 3.2 ລົດແຫ່ງຄວາມຮັກລະຫວ່າງໝູ່ເພື່ອນ

ຄົນເຮົາທຸກຄົນຢູ່ໃນສັງຄົມບໍ່ສາມາດຢູ່ໂດດດ່ຽວຄົນດຽວໄດ້, ຕ້ອງໄດ້ອາໄສຄວາມຮັກແພງຊ່ວຍເຫຼືອເຊິ່ງກັນ ແລະກັນຈຶ່ງຈະຢູ່ລອດໄດ້. ບຸກຄົນທີ່ສຳຄັນໃນການໃຫ້ຄວາມຊ່ວຍເຫຼືອເຊິ່ງກັນ ແລະກັນນັ້ນສ່ວນຫຼາຍກໍແມ່ນບຸກຄົນຕ່າງໆທີ່ຢູ່ອ້ອມຕົວເຮົາເອງ ເຊິ່ງເຮົາຖືເຂົາເຈົ້າເປັນເພື່ອນສະນິດຕິດແທດກັນ. ດັ່ງນັ້ນ, ຄວາມຮັກໝູ່ເພື່ອນຈຶ່ງເປັນອີກຄວາມຮັກປະເພດໜຶ່ງທີ່ສຳຄັນທີ່ນັກຂຽນໝູນໃຊ້ເຂົ້າໃນບົດວັນນະຄະດີ. ໃນບົດເລື່ອງ "ພາຍຸຊີວິດ" ກໍເຫັນສະແດງອອກເຖິງລົດຄວາມຮັກໝູ່ເພື່ອນຫຼາຍແບບດັ່ງນີ້:

**ຄວາມຮັກທີ່ມີຕໍ່ໝູ່ເພື່ອນທົ່ວໄປ**

ລົດຄວາມຮັກທີ່ມີຕໍ່ໝູ່ເພື່ອນທົ່ວໄປໃນນີ້ແມ່ນ ໝາຍເຖິງ

ໝູ່ເພື່ອນຮ່ວມສັງຄົມດຽວກັນທີ່ມີຄວາມຮັກ ແລະຄວາມຫວັງດີຕໍ່ກັນເຊັ່ນ ໝູ່ເພື່ອນຮຸ່ນດຽວກັນ, ເພື່ອນຮ່ວມບ້ານ, ຮ່ວມໂຮງຮຽນ ... ເຫຼົ່ານີ້ເປັນຕົ້ນ.

ໃນນະວະນິຍາຍ "ພາຍຸຊີດ" ຂອງ ດາວເໜືອ ກໍມີຫຼາຍຕອນທີ່ນັກຂຽນໄດ້ພັນລະນາໃຫ້ເຫັນເຖິງລົດຄວາມຮັກຂອງໝູ່ເພື່ອນທົ່ວໄປດັ່ງ:

*"ຍັງບໍ່ເຫັນເອື້ອນບັກຂຽດຕະປາດໃຫ້ຂ້ອຍນັ້ນມີແຕ່ອີ່ຈຳປາລູກລຸງແສງທິບຜູ້ດຽວຫັ້ນແຫຼະ. ມັນກໍອາຍຸທໍ່ດຽວກັບອີ່ເພັງ ມັນມັກພາອີ່ເພັງໄປອາບນໍ້າ, ໄປຊຸດຈີ່ນາຍ ຫຼືບາງເທື່ອຄັນວ່າແມ່ມັນເອົາໝາກແຕງ, ສາລີມາແຕ່ໄຮ່ ມັນກໍລັກເຊື່ອງໃສ່ກ້ອງຂີ້ແຮ້ມາໃຫ້ອີ່ເພັງ." (ໜ:9)*

ຈາກຕົວຢ່າງຂ້າງເທິງ ນັກຂຽນໄດ້ພະຍາຍາມສື່ລົດຄວາມຮັກຂອງໝູ່ເພື່ອນຕໍ່ຜູ້ອ່ານດ້ວຍການໃຫ້ກຽດ, ແບ່ງປັນວັດຖຸປັດໄຈໃຫ້ແກ່ໝູ່ເພື່ອນຮ່ວມສັງຄົມຮຸ່ນຮາວຄາວດຽວກັນ, ເປັນຄວາມຮັກທີ່ບໍ່ມີສະເພາະແຕ່ຜູ້ໃຫຍ່, ແຕ່ຫາກມີໃຫ້ກັນໄດ້ໝົດທຸກອາຍຸກສຽນ, ທຸກເພດທຸກໄວ, ນັກຂຽນໃຊ້ຮູບແບບເອົາໝາກແຕງ, ສາລີ ເຊື່ອງໃສ່ກ້ອງຂີ້ແຮ້ໃຫ້ອີ່ເພັງ ສ່ຽງຕໍ່ການຖືກດ່າຮ້າຍຈາກຜູ້ເປັນແມ່ ແມ່ນຮູບການຢາກບົ່ງບອກເຖິງຄວາມຮັກຂອງໝູ່ເພື່ອນ, ການພັນລະນາແບບນີ້ໄດ້ເຮັດໃຫ້ຜູ້ອ່ານເກີດມະໂນພາບໃນຕົວເຊື່ອມະໂນພາບນັ້ນແມ່ນລົດຊາດອັນເລິກເຊິ່ງຂອງຄວາມຮັກທີ່ມີຕໍ່ໝູ່ເພື່ອນຖືກພັນລະນາຢ່າງເປີດເຜີຍໃນເລື່ອງເພື່ອໃຫ້ໄດ້ລົດຊາດ. ຄວາມຮັກຂອງໝູ່ເພື່ອນໃນເລື່ອງນີ້ຍັງໄດ້ສະແດງອອກໃນຫຼາຍຕອນຂອງເລື່ອງດັ່ງ:

*"ຮວ່າຍເກັ່ງ !ມຶງຊິໄປຢູ່ນຳພໍ່ຈາງວາງແທ້ຫວະ ?ຄັນມຶງໄປແທ້ແມ່ນມຶງຕາຍໂລດນາ, ແນວໃດເພິ່ນກໍຕີມຶງຄືງົວຄືຄວາຍໂລດແຫຼະເບິ່ງຕິ !ຫວ່າງປີກາຍນີ້ເພິ່ນເອົາເອື້ອຍເກດແກ້ວມາຢູ່ນຳທຳອິດເພິ່ນກໍເຮັດຄືວ່າຮັກວ່າແພງແທ້ ແຕ່ດົນມາບໍ່ຈັກເຕະຈັກຕີຊໍ້າບໍ່ໜຳຫຼິ້ນເພິ່ນມີລູກອີກ ໃກ້ຊິຮອດເດືອນຄອງແລ້ວພັດຮະຫົວລາວໜີ, ເງິນກີບໜຶ່ງພໍຊື້ຜ້າອ້ອມໃຫ້ລູກເພິ່ນກໍບໍ່ໃຫ້ລາວ, ອັນນັ້ນຍັງວ່າເພິ່ນຜູ້ໃຫຍ່ ,ເປັນຜູ້ຮູ້ວຽກເຮືອນການຊານແລ້ວ. ບາດມຶງ ...ມຶງມີຫວັງຕາຍໂລດນາ !ຈັ່ງຖ້າເບິ່ງມຶງບໍ່ເຊື່ອກູບ່າ." (ໜ:13)*

ຈາກຕົວຢ່າງນີ້ ດາວເໜືອພະຍາຍາມຍົກໃຫ້ເຫັນເຖິງຄວາມຮັກ, ຄວາມເປັນຫ່ວງໝູ່ເພື່ອນຂອງຕົວລະຄອນບັກພັນ (ເອີ້ນຕາມນັກຂຽນ) ທີ່ມີຕໍ່ຕົວລະຄອນຂ້ອຍ ບໍ່ຢາກໃຫ້ໝູ່ໄດ້ຮັບຄວາມເຈັບປວດທໍລະມານ, ນັກຂຽນໄດ້ຍົກເອົາຮູບພາບຂອງຄົນອື່ນມາປຽບທຽບເພື່ອເປັນອຸທາຫອນໃຫ້ແກ່ຕົວລະຄອນປັດຈຸບັນ, ຜ່ານການບັນລະຍາຍຂອງບັກພັນແມ່ນແມ່ນພາບຕົວແທນຄວາມຮັກຂອງເພື່ອນຢ່າງມະຫັດສະຈັນອັນໄດ້ເຮັດໃຫ້ຜູ້ອ່ານໄດ້ຮັບອັດຖະລົດຂອງຄວາມຮັກໃນວັນນະຄະດີ, ເຊິ່ງແມ່ນຄວາມຮັກຈາກໃຈຈິງຂອງໝູ່ເພື່ອນທີ່ມີຄວາມເປັນຫ່ວງເປັນໃຍ.

ນອກຈາກຄວາມຮັກແບບໝູ່ເພື່ອນສະໜິດແລ້ວ, ຢູ່ໃນບ້ານກໍຕ້ອງມີຄວາມຮັກແພງກັນທົ່ວໆໄປຕາມວັດທະນະທຳທີ່ເຄີຍມີມາເຊິ່ງຄວາມຮັກອັນນີ້ແມ່ນມີໃນທຸກໝູ່ບ້ານເຊັ່ນສະແດງອອກໃນບາງຕອນວ່າ:

*"ແຕ່ລະມື້ລຸງທິບໄດ້ທຽວມາເບິ່ງຂ້ອຍ ຫຼືສາມເທື່ອໃນສາມມື້ໃດເພິ່ນໄດ້ປ່ຽນຮາກຢາທໍ່ຂາໃຫ້ຂ້ອຍເທື່ອໜຶ່ງ, ຂ້ອຍຮັກແພງ ແລະເຄົາລົບນັບຖືເພິ່ນຄືພໍ່ຄືງຂອງຂ້ອຍ." (ໜ:34)*

ຈາກຕົວຢ່າງນີ້ນັກຂຽນໄດ້ສື່ໃຫ້ຜູ້ອ່ານເຫັນໄດ້ເຖິງຄວາມຮັກອີກຮູບແບບໜຶ່ງ, ຄວາມຮັກທີ່ບໍ່ມີພົມແດນ ແມ່ນຄວາມຮັກແພງລະຫວ່າງຊາວບ້ານດ້ວຍກັນທີ່ຄອຍໃຫ້ຄວາມຊ່ວຍເຫຼືອ, ແກ້ໄຂບັນຫາຕ່າງໆໃນເວລາເຈັບເປັນ, ສຸກເສີນຕ່າງໆເຊິ່ງຄວາມຮັກເຫຼົ່ານີ້ກໍມີຄວາມສຳຄັນ ແລະອົບອຸ່ນຄອຍຕາມຕົວເຮົາຢູ່ສະເໝີ. ນັກຂຽນຍົກເອົາການປິ່ນປົວດ້ວຍຢາພື້ນເມືອງຂອງລຸງແສງທິບ ປະສົມປະສານກັບຄວາມຮັກຂອງຕົວລະຄອນຂ້ອຍຕໍ່ລຸງແສງທິບແມ່ນວິທີການສັນລະເສີນຄວາມຮັກຄວາມຈິງໃຈຂອງຊາວບ້ານ, ໄດ້ສື່ໃຫ້ຜູ້ອ່ານເກີດມີຄວາມຍິນດີໃນຈິນຕະນາການ, ເຂົ້າເຖິງລົດຊາດຄວາມຮັກໃນວັນນະຄະດີຢ່າງເຖິງຖອງ, ໂດຍສະເພາະແມ່ນຄວາມຮັກແພງຂອງຊາວບ້ານດ້ວຍກັນທີ່ບໍ່ປະຖິ້ມກັນໃນຍາມທຸກຈົນດັ່ງສະແດງອອກໃນເລື່ອງ:

*"ສອງມື້ຕໍ່ມາ ພໍ່ອ້າຍຊຽງບຸນມີ ຈຳຕ້ອງຫິ້ວພິກພາຍຂອດທີ່ແມ່ນມໍລະດົກຍິບສຸດທ້າຍທີ່ເຫຼືອຈາກເອົາໄປທານຫາເມຍແລະລູກຊາຍຂອງເພິ່ນ ແລ້ວມາໂຮມກັນຢູ່ເຮືອນຂ້ອຍ. ເປັນອັນວ່າຕັ້ງແຕ່ມື້ນັ້ນເປັນຕົ້ນມາ ສອງອ້າຍນ້ອງພວກຂ້ອຍໄດ້ມີພໍ່ສອງຄົນ." (ໜ:75)*

ຈາກຂໍ້ຄວາມຂ້າງເທິງເຫັນວ່າຄວາມຮັກຄວາມສາມັກຄີຜູກພັນຂອງບັນດາຕົວລະຄອນໂດຍຜ່ານການປະພັນຂອງນັກຂຽນແມ່ນເຫຼືອພັນລະນາເຂົາເຈົ້າຮັກແພງກັນຄືອ້າຍຄືນ້ອງ, ຄືພໍ່ແມ່ດຽວກັນ, ການທີ່ພໍ່ຊຽງບຸນມີຍ້າຍມາຢູ່ກັບຄອບຄົວຂອງຂ້ອຍແມ່ນຮູບແບບຄວາມຮັກທີ່ເຫຼືອພັນລະນາ, ສິ່ງນີ້ໄດ້ຖືກຊຶມເລິກເຂົ້າສູ່ຫົວໃຈຂອງຜູ້ອ່ານເຮັດໃຫ້ເກີດມີສູນທະລິຍະພາບຂຶ້ນມາຕໍ່ກັບຄວາມຍິ່ງໃຫຍ່ໃນຄວາມຮັກຂອງເຂົາເຈົ້າ, ສຳຜັດໄດ້ກັບ

ລິດຊາດອັນແທ້ຈິງຂອງວັນນະຄະດີ. ເປັນວິທີການທີ່ນັກຂຽນໃຊ້ໃຫ້ຜູ້ອ່ານເກີດຄວາມສະເທືອນໃຈໃນເວລາໄດ້ອ່ານ. ດັ່ງນັ້ນ, ເວລາອ່ານຈິ່ງເກີດລິດວັນນະຄະດີ.

**ຄວາມຮັກທີ່ມີຕໍ່ໝູ່ເພື່ອນຮ່ວມອຸດົມການ**

ໝູ່ເພື່ອນຮ່ວມອຸດົມການໝາຍເຖິງເພື່ອນທີ່ຮ່ວມງານໃນໜ້າວຽກດຽວກັນ, ດັ່ງນັ້ນ, ຈິ່ງມີຄວາມຈຳເປັນຕ້ອງສາມັກຄີກັນ, ຮັກແພງຊ່ວຍເຫຼືອເຊິ່ງກັນ ແລະກັນ, ຖືເປັນຄວາມຮັກທີ່ສຳຄັນ, ຍິ່ງໃຫຍ່, ບໍລິສຸດຕໍ່ກັນແທ້ໆ ແລະຕ້ອງມີຄວາມໄວ້ເນື້ອເຊື່ອໃຈກັນເຖິງຂັ້ນຕາຍກໍຕ້ອງຕາຍນຳກັນ. ຍ້ອນແນວນັ້ນຄວາມຮັກນີ້ຈິ່ງໄດ້ກາຍເປັນລິດວັນນະຄະດີປະເພດໜຶ່ງທີ່ຂາດບໍ່ໄດ້ໃນບົດປະພັນ.

ນະວະນິຍາ "ພາຍຸຊີວິດ" ນັກຂຽນກໍໄດ້ພັນລະນາໃຫ້ເຫັນຄວາມຮັກລະຫວ່າງເພື່ອນຮ່ວມອຸດົມການໃນຫຼາຍຕອນດັ່ງ:

*"ພັນສ່ຽວ ! ເຮົາບໍ່ອາດຈະຈາກໂຕໄດ້ດອກໂຕຈິ່ງເຫັນໃຈເຮົາ, ເຮົາຈະຢູ່ນຳໂຕ, ຈະເປັນເພື່ອນສູ້ຮົບນຳໂຕ, ເຖິງຂັ້ນວ່າເຮົາຕ້ອງຕາຍ ພວກເຮົາກໍຕ້ອງຕາຍຮຽງກັນຢູ່ນີ້ ຂ້ອຍພະຍາຍາມຂໍຄວາມເຫັນໃຈຈາກມັນແນວນັ້ນ ແລະຂ້ອຍກໍຢາກໂດດກອດຄໍບັກພັນໃນເວລາທີ່ມັນບອກວ່າ: ຂາເຮົາຫັກໝົດທັງສອງເບື້ອງ." (ໜ:100)*

ຈາກຕົວຢ່າງຂ້າງເທິງນີ້ ນັກຂຽນໄດ້ຍົກໃຫ້ເຫັນເຖິງນ້ຳໃຈຄວາມຮັກເພື່ອນມິດສະຫາຍໃນຖານະເພື່ອນຮ່ວມຮົບຂອງຊາຍສະກັນຈະບໍ່ຍອມປະຖິ້ມໝູ່ເພື່ອນເປັນອັນຂາດ, ເຖິງແມ່ນຕາຍກໍຕ້ອງຕາຍນຳກັນ, ນັກແຕ່ງໄດ້ຍົກເຫດການທີ່ສຳຄັນໃນໃວລາສູ້ຮົບຮ່ວມເປັນຮ່ວມຕາຍນຳກັນສ່ຽວຜູ້ໜຶ່ງຖືກບາດເຈັບຂາຫັກທັງສອງເບື້ອງ ອີກສ່ຽວຜູ້ໜຶ່ງພົດປອດໄພ, ແຕ່ຕ່າງຄົນກໍຢູ່ໃນຄວາມອັນຕະລາຍເຊັ່ນກັນ .ການຂໍຮ້ອງເພື່ອໃຫ້ສ່ຽວຜູ້ປອດໄພໜີໄປເພື່ອເອົາຊີວິດລອດນັ້ນ ແມ່ນຄວາມຮັກ ແລະເສຍສະຫຼະອັນຍິ່ງໃຫຍ່ທີ່ມີຕໍ່ເພື່ອຮ່ວມຮົບ, ກົງກັນຂ້າມສ່ວນຜູ້ທີ່ປອດໄພກໍປະຕິເສດຄວາມຫວັງດີຂອງເພື່ອນຮ່ວມຮົບດັ່ງກ່າວເພື່ອເປັນການສະແດງເຖິງຄວາມເສຍສະຫຼະຂອງເພື່ອນຮ່ວມອຸດົມການ, ເຂົາກໍບໍ່ຍອມຖອຍເພື່ອກຽດສັກສີຂອງຄຳວ່າເພື່ອນ. ນີ້ແມ່ນນ້ຳໃຈຮັກເພື່ອນອັນຍອດຍິ່ງ, ແມ່ນຄວາມຮັກຂອງເພື່ອນຮ່ວມອຸດົມຄະຕິຢ່າງແທ້ຈິງ. ເມື່ອອ່ານແລ້ວເຮັດໃຫ້ຜູ້ອ່ານເກີດຄວາມສະດຸ້ງໃຈຕໍ່ຄວາມຮັກດັ່ງກ່າວ, ເກີດອາລົມສະເທືອນເຖິງລິດຄວາມຮັກດັ່ງກ່າວ. ມີບາງຄັ້ງເພື່ອນຮ່ວມອຸດົມຄະຕິຍັງຕ້ອງຍອມເສຍສະຫຼະແມ່ນກະທັ້ງຊີວິເພື່ອພາລະກິດ ເພື່ອການມີຊີວິດຂອງເພື່ອນອີກໜຶ່ງຄົນທີ່ຍັງມີຄວາມຫວັງໃນອະນາຄົດ, ດັ່ງທີ່ສະແດງອອກບາງຕອນວ່າ :

*"ເກັ່ງ !ໂຕຮູ້ບໍ່ວ່າເປັນຫຍັງພວກມັນຈິ່ງບໍ່ຍອມຖອຍ ແລະມັນພັດບໍ່ບຸກໂຈມຕີພວກເຮົາແຮງກວ່ານີ້ ອັນນີ້ແມ່ນມັນຕິຈ່ອງພວກເຮົາ ບໍ່ໃຫ້ພວກເຮົາຖອຍ, ພວກມັນໄປນຳເອົາໝູ່ມາອີກແລ້ວ ພວກມັນຊິອ້ອມຈັບພວກເຮົາທັງເປັນ. ຈັ່ງຊັ້ນເຮົາຈິ່ງເວົ້າວ່າໃຫ້ໂຕຖອຍສາ, ໂຕຈະຖືເອົາໂອກາດນີ້ເພື່ອເປັນການລ້າງແຄ້ນບໍ່ໄດ້ດອກ. ໂຕຄວນຊອກໂອກາດໃໝ່ທີ່ດີກວ່ານີ້ ໄປໂຕຈິ່ງຟັງຄວາມເຮົາສ່ຽວເຮີຍ !ຖ້າແມ່ນເຮົາຕາຍຢູ່ນີ້ອີ່ຫຼີ ບາດໂຕໄປຮອດອ້າຍນ້ອງແນວລາວຮັກຊາດໂຕຈິ່ງເວົ້າເລື່ອງນີ້ໃຫ້ພວກເພິ່ນຮູ້ນຳ ແລະຖ້າໂຕມີໂອກາດເມືອຢາມບ້ານໂຕຈິ່ງນຳເອົາເລື່ອງນີ້ໄປເວົ້າສູ່ພໍ່ແມ່ເຮົາຟັງແດ່ ສຳລັບ ປານີ ຂອງເຮົານັ້ນໃຫ້ໂຕພະຍາຍາມອົບອຸ່ນລາວ ແລະເຮົາຂໍຝາກເຄື່ອງອັນນີ້ຄືນໃຫ້ ປານີ ແດ່ໂຕພະຍາຍາມສົ່ງໃຫ້ຮອດມື ປານີ ຊ່ວຍເຮົາແດ່ເນີສ່ຽວ !." (ໜ:101)*

ຜ່ານຕົວຢ່າງຂ້າງເທິງ ຜູ້ແຕ່ງພະຍາຍາມໃຫ້ເຮົາເຫັນໄດ້ເຖິງນ້ຳໃຈເສຍສະຫຼະຂອງເພື່ອນຮ່ວມອຸດົມການ, ຄວາມຮັກຂອງເພື່ອນຮ່ວມຮົບອັນກ້າແກ່ນ, ຄວາມຮັກຂອງເພື່ອນຈະບໍ່ມີວັນຈືດຈາງ ແລະບໍ່ມີສິ່ງໃດໆມາຂວາງກັ້ນໄດ້. ເຖິງຈະຕາຍໄປກໍຕາຍຢ່າງມີກຽດສັກສີ, ແມ່ນການຕາຍເພື່ອປົກປ້ອງໝູ່ເພື່ອນເພື່ອສືບຕໍ່ພາລະກິດການຕໍ່ສູ້ອັນພິລະອາດຫານ ເພື່ອໃຫ້ຄວາມຫວັງຂອງໝູ່ໄດ້ປະສົບຜົນສຳເລັດ, ຍອມສະຫຼະແມ່ນແຕ່ຊີວິດ. ການຍອມເສຍສະຫຼະຂອງສ່ຽວພັນເພື່ອໃຫ້ໝູ່ໄດ້ສືບຕໍ່ພາລະກິດແມ່ນການສ້າງໃຫ້ຜູ້ອ່ານເກີດຄວາມສະທືອນໃຈເຖິງນ້ຳໃຈເສຍສະຫຼະກັບຄວາມຮັກທີ່ມີຕໍ່ເພື່ອນ. ຈາກຕົວຢ່າງນີ້ ເຮົາເຫັນໄດ້ວ່ານັກແຕ່ງໄດ້ເນັ້ນໜັກເຖິງອາລົມຄວາມນຶກຄິດໃຫ້ແກ່ຜູ້ອ່ານເກີດລິດແຫ່ງຄວາມຮັກໃນວັນນະຄະດີ (ຮັກໝູ່ເພື່ອນຮ່ວມອຸດົມການ) ເຮັດໃຫ້ບົດໄດ້ຮັບສຸນທະລິຍະພາບແກ່ຜູ້ອ່ານທັງຫຼາຍດັ່ງ:

*"ຄວາມຮັກແພງ ແລະຄວາມເຫັນອົກເຫັນໃຈກັນລະຫວ່າງສອງສ່ຽວພວກຂ້ອຍໄດ້ພົມພາບອອກມາ ດ້ວຍຢາດນ້ຳຕາອັນໃສແສນໃສປຽບເໝືອນສາຍໃຈແຫ່ງການເປັນສະຫາຍຂອງພວກຂ້ອຍ ຊຶ່ງຈະຫາຍາມຂຸ່ນບໍ່ມີຕະຫຼອດໄລຍະ 21 ປີທີ່ໄດ້ເພິ່ງຊີວິດຢູ່ໃນໂລກອັນໄພສານໜ່ວຍນີ້ ພົງພະນາວັນອັນຮົກເຮື້ອຕຶບໜາຊຶ່ງໄດ້ວາດເອົາໄວ້ທຸກພາບທີ່ເຄັ່ງຂຶມ ແລະໜ້າຢ້ານກົວນັ້ນມັນໄດ້ກາຍເປັນວົງສະມຸດອັນກວ້າງເລິກທີ່ຖືກລົ້ນອັ່ງໄປດ້ວຍຄວາມເຫັນອົກເຫັນໃຈຂອງສອງສ່ຽວພວກຂ້ອຍ."*

*(ໜ:102)*

ຜ່ານຕົວຢ່າງນີ້ເຮົາເຫັນໄດ້ເຖິງການສ້າງພາບພັນລະນາເຖິງຄວາມຮັກດ້ວຍຄວາມນຶກຄິດຂອງຕົວລະຄອນຝ່າຍໜຶ່ງໃນເວລາທີ່ໝູ່ໄດ້ຈາກໄປ, ເປັນຄວາມຮັກແພງຂອງເພື່ອນຮ່ວມອຸດົມການອັນຍິ່ງໃຫຍ່ໄພສານບໍ່ມີຫຍັງຈະມາປຽບປານ ແລະຂວາງກັ້ນໄດ້. ໃນເມື່ອຝ່າຍໃດໜຶ່ງຫາກຈາກໄປມັນຈຶ່ງບໍ່ແມ່ນເລື່ອງແປກທີ່ອີກຝ່າຍຈະຕ້ອງໄດ້ຮັບຄວາມລະທົມຂົມຂື່ນ, ແຕ່ເປັນຄວາມຂົມຂື່ນທີ່ເຕັມໄປດ້ວຍຄວາມຮັກ ແລະຮອຍຍິ້ມອັນແສນຫວານ, ໃສສະອາດ ແລະຍືນຍົງໃນດວງໃຈຕະຫຼອດໄປ, ເຮັດໃຫ້ຜູ້ອ່ານເກີດລົດແຫ່ງຄວາມສົງສານກັບຄວາມຮັກຂອງເຂົາເຈົ້າ. ຍ້ອນແນວນັ້ນເຮົາຈຶ່ງເຫັນລົດຄວາມຮັກອັນຍິ່ງໃຫຍ່ຂອງເພື່ອນຮ່ວມອຸດົມການໂດຍຜ່ານການພັນລະນາຂອງ ດາວເໜືອ.

**3.3 ລົດແຫ່ງຄວາມຮັກລະຫວ່າງໜຸ່ມສາວ**

ມະນຸດເຮົາທັງຊາຍ ແລະຍິງແມ່ນໃຫຍ່ກ້າໜ້າບານຂຶ້ນມາກໍມີຄວາມປະສົງສະແຫວງຫາຄວາມຮັກຕາມກົດເກນທຳມະຊາດຂອງມະນຸດ. ຄວາມຮັກລະຫວ່າງໜຸ່ມສາວຖືເປັນທີ່ສຸດຂອງຄວາມຮັກທີ່ທຸກຄົນປາຖະໜາໃນນີ້ບາງຄັ້ງກໍສົມຫວັງ, ແຕ່ບາງຄັ້ງກໍຜິດຫວັງ ແລະມີຫຼາຍຮູບແບບ ບາງຄູ່ກໍເປັນຄວາມຮັກທີ່ເກີດຈາກຄວາມເຂົ້າໃຈຂອງທັງສອງຝ່າຍ, ແຕ່ບາງຄັ້ງກໍເກີດຈາກການບັງຄັບນາບຂູ່ເອົາ. ເຖິງຢ່າງໃດກໍຕາມເມື່ອຄວາມຮັກເຫຼົ່ານີ້ປາກົດໃນບົດວັນນະຄະດີມັນໄດ້ກາຍເປັນລົດຊາດຢ່າງໜຶ່ງທີ່ກະທົບເຖິງຈິດໃຈແລະຄວາມຮູ້ສຶກຂອງຜູ້ອ່ານ. ນະວະນິຍາຍ "ພາຍຸຊີວິດ" ນັກຂຽນກໍໄດ້ເວົ້າເຖິງຄວາມຮັກຂອງບ່າວສາວໃນລັກສະນະຫຼາຍຮູບແບບດັ່ງນີ້:

**ຄວາມຮັກທີ່ເກີດຈາກໃຈຈິງ**

ຄວາມຮັກທີ່ເກີດຈາກໃຈຈິງ ຖືເປັນຄວາມຮັກທີ່ທຸກຄົນປາຖະໜາຫາ, ເປັນຮັກທີ່ເກີດຈາກຄວາມພໍອົກພໍໃຈຂອງທັງສອງກ້ຳສອງຝ່າຍໄດ້ຕົກລົງເຫັນດີກັນແລ້ວຈຶ່ງສ້າງຮັກນັ້ນຂຶ້ນມາ, ບັນດານັກຂຽນທັງຫຼາຍໄດ້ພະຍາຍາມສ້າງ ແລະສົ່ງເສີມຄວາມຮັກແບບນີ້ໃນບົດວັນນະຄະດີຂອງຕົນເອງ, ດັ່ງ ດາວເໜືອ ໄດ້ສ້າງຮັກນີ້ຂຶ້ນໃນ "ພາຍຸຊີວິດ" ຫຼາຍຄູ່ດ້ວຍກັນເປັນຕົ້ນແມ່ນ ຄຳເກັ່ງ ກັບ ເພັດສີລາ, ຊຽງບຸນມີ ກັບ ຄຳເພັງ, ຄຳພັນ ກັບ ປານີ, ກໍລະກັນ ກັບ ຄຳເພັງ. ເຊິ່ງແຕ່ລະຄູ່ກໍມີລົດຊາດແຕກຕ່າງກັນ, ດັ່ງສະແດງອອກບາງຕອນວ່າ :

*"ຄຳເພັງ !ມາເຖິງມື້ນີ້ ອ້າຍຮັບຮອງວ່າອ້າຍຍັງຮັກນ້ອງຫຼາຍ, ອ້າຍບໍ່ຊ່າງຈະເອົາຄວາມເວົ້າ ແລະວັດຖຸໃດໆມາເປັນເດີມພັນໃຫ້ແກ່ຄວາມຮັກ ແລະຄວາມຕັ້ງໃຈຂອງອ້າຍໄດ້ ແລະຄວາມຮັກນີ້ກໍຈະຍືນຍົງຢູ່ໃນຫົວໃຈຂອງອ້າຍຕະຫຼອດໄປ." (ໜ:49)*

ຈາກຕົວຢ່າງຂ້າງເທິງ ນັກຂຽນໄດ້ພັນລະນາເຖິງຄວາມຮັກຂອງຊຽງບຸນມີທີ່ມີຕໍ່ນາງຄຳເພັງຢ່າງໝົດຈິດໝົດໃຈ, ເປັນຄວາມຮັກທີ່ເກີດຈາກຄວາມພໍໃຈ ແລະພ້ອມຈະຖະນຸຖະໜອມບຳລຸງຮັກນັ້ນໃຫ້ຍືນຍາວຕະຫຼອດໄປ. ນັກຂຽນພະຍາຍາມຖອດຈິດວິນຍານຂອງຄົນຜູ້ໜຶ່ງທີ່ມີຄວາມຮັກອອກມາໂດຍຜ່ານຄຳເວົ້າທີ່ເຕັມໄປດ້ວຍຄວາມກະລຸນາ, ເຮັດໃຫ້ຜູ້ອ່ານເກີດອັດຖະລົດຂອງຄວາມຮັກດັ່ງກ່າວໃນເວລາອ່ານ , ສິ່ງຜົນໃຫ້ມີລົດຂອງວັນນະຄະດີ. ສ່ວນຝ່າຍຍິງຄື ຄຳເພັງ ກໍບໍ່ນ້ອຍໜ້າກວ່າຝ່າຍຊາຍດັ່ງ:

*"ນ້ອງຢາກຂໍໃຫ້ອ້າຍຈົ່ງອົດສາເຊື່ອຜູ້ຍິງແດ່ ຖ້າວ່າມັນບໍ່ເປັນການເຫຼືອແຮງກ່າດາຍ ນ້ອງທຸກແທ້ອ້າຍຊຽງບຸນມີເອີຍ !ແຕ່ນ້ອງຂໍແທັນຂີ້ດິນຢູ່ໃນເວີງບ້ານຂອງນ້ອງເອງ ຍັງຈະແຊບກວ່າໄປຂໍກິນອາຫານທິບຢູ່ໃນພາເຂົ້າຂອງຜູ້ອື່ນອ້າຍຊຽງເອີຍ !ອົດສາເຊື່ອນ້ອງແດ່." (ໜ:50)*

ຈາກຕົວຢ່າງນີ້ ນັກຂຽນໄດ້ພະຍາຍາມດຶງເອົາຜູ້ອ່ານເຂົ້າສູ່ສ່ວນເລິກຂອງຫົວໃຈຜູ້ຍິງ, ເຊິ່ງເຂົາກໍມີຄວາມຮັກ ຄວາມຈິງໃຈ, ບໍລິສຸດພຸດຜ່ອງຕໍ່ຄວາມຮັກຂອງເຂົາ, ພ້ອມກັນນັ້ນຄວາມຮັກຂອງຜູ້ຍິງກໍບໍ່ໄດ້ເຫັນແກ່ຕຳແໜ່ງ, ວັດຖຸເງິນຄຳແຕ່ຢ່າງໃດ, ເຂົາກໍຕ້ອງການຄວາມຮັກອັນບໍລິສຸດເຊັ່ນກັນ, ເພາະຄວາມຮັກທີ່ແທ້ຈິງນັ້ນຕ້ອງເກີດຈາກຄວາມພໍໃຈຂອງທັງສອງຝ່າຍເທົ່ານັ້ນ. ນັກຂຽນໄດ້ໃຊ້ຮູບແບບການຂໍຄວາມເຫັນໃຈຈາກຝ່າຍຊາຍໃຫ້ສົງສານຄວາມຮັກທີ່ເຂົາມີນັ້ນດ້ວຍ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຜູ້ອ່ານເກີດລົດຂອງຄວາມຮັກຂຶ້ນໄດ້. ສຳລັບຄູ່ຂອງຄຳເກັ່ງ ກັບ ເພັດສີລາກໍເປັນອີກຄູ່ໜຶ່ງທີ່ໄດ້ສ້າງຄວາມຮັກຂຶ້ນບົນພື້ນຖານທີ່ເກີດຮັກຈາກໃຈຈິງເຊັ່ນ:

*"ແມ່ນແລ້ວຂ້ອຍຮັກເພັດສີລາຂອງຂ້ອຍຫຼາຍ, ຕົ້ນດອກຮັກຕົ້ນທຳອິດທີ່ຂ້ອຍປູກຂຶ້ນໄວ້ໃນຊວງອົກຂອງຂ້ອຍແມ່ນເພັດສີລາເປັນຄົນປູກ ແລະເປັນຜູ້ໃຫ້ການອຸປະຖາກແກ່ມັນແຕ່ລະເຊົ້າແຕ່ລະແລງ ແລະຕົ້ນດອກຮັກຕົ້ນທຳອິດທີ່ມີໃນຫົວໃຈຂອງເພັດສີລາກໍແນ່ນອນວ່າແມ່ນຂ້ອຍເອງເປັນຄົນປູກຂຶ້ນ ... ມາຮອດມື້ນີ້ ຕົ້ນດອກຮັກໄດ້ຄ່ອຍໆແຕກໜໍ່ຈໍ່ດອກອັນຂາວນວນ ແລະດອກນັ້ນກໍຖືກອ້ອມກອດເອົາໄວ້ດ້ວຍຊໍ່ຂັ້ວນສີຂຽວອ່ອນ." (ໜ:79)*

ຈາກຕົວຢ່າງຂ້າງເທິງໄດ້ເຮັດໃຫ້ຜູ້ອ່ານເຫັນໄດ້ກັບຄວາມ

ຮັກລະຫວ່າງບ່າວ-ສາວທີ່ເກີດຈາກຄວາມພໍໃຈ ແລະເປັນຄວາມຮັກທີ່ຫາກໍແຕກໜໍ່ຈໍ່ໃບຄ່ອຍໆເຕີບໃຫຍ່ຂຶ້ນເລື້ອຍໆ, ຄວາມຮັກຂອງເຂົາໄດ້ເຕັມໄປດ້ວຍຄວາມບໍລິສຸດຜຸດຜ່ອງ, ຂາວສະອາດ ແລະກໍພ້ອມທີ່ຈະໂອບຈອດໄດ້ທຸກເມື່ອຖ້າຫາກເຖິງເວລາອັນສົມຄວນ. ນັກຂຽນໄດ້ໃຊ້ຄວາມສາມາດໃນການພັນລະນາຄວາມຮັກຕັ້ງແຕ່ຄາວນ້ອຍໆ ແລະຄ່ອຍໆຂະຫຍາຍຕົວຈົນເຖິງຂັ້ນເບັ່ງບານຕາມການເວລາ, ເຮັດໃຫ້ຜູ້ອ່ານເກີດອາລົມຄ້ອຍຕາມ, ສ້າງລົດຄວາມຮັກອັນນີ້ໃຫ້ຜູ້ອ່ານໄດ້ຮັບຄວາມສະເທືອນໃຈກັບລົດຄວາມຮັກອັນຫອມຫວານຂອງບ່າວ-ສາວໄດ້. ຄວາມຮັກທີ່ເກີດຈາກໃຈຈິງນັ້ນບໍ່ມີໃຜກຳນົດໃຫ້, ແຕ່ຫາກແມ່ນຄວາມຮຽກຮ້ອງຕ້ອງການຂອງຫົວໃຈດັ່ງ:

*"ຄຳເພັງ ອ້າຍກ້າສາລະພາບວ່າອ້າຍຮັກນ້ອງເໜືອກວ່າທຸກສິ່ງ ແລະທຸກຍິງທີ່ອ້າຍໄດ້ພົບໃນຊີວິດ, ຖ້າຄຳເພັງຫາກເຫັນໃຈອ້າຍ ແລະອະນຸຍາດໃຫ້ອ້າຍໄດ້ຮັກນ້ອງ ອ້າຍຈະເປັນຜູ້ຊາຍທີ່ມີຄວາມສຸກກວ່າທຸກຄົນໃນໂລກ ,ແຕ່ກົງກັນຂ້າມຖ້ານ້ອງຫາກແກ້ງຝືນຄວາມປະສົງຂອງອ້າຍໃນຄັ້ງນີ້ແລ້ວ ອ້າຍຄົງຈະດັບຊາດຈາກໂລກທໍລະມານໜ່ວຍນີ້ໄປຍັງຈະດີກວ່າທີ່ຈະເຫັນຄຳເພັງຕົກເປັນຂອງຄົນອື່ນ ເຫັນໃຈອ້າຍເຖີດທີ່ຮັກ!." (ໜ:42)*

ຈາກຕົວຢ່າງທີ່ຍົກມາຂ້າງເທິງເປັນສິ່ງພິສູດໃຫ້ເຮົາເຫັນໄດ້ວ່າ ຄວາມຮັກຮູບແບບນີ້ປະເສີດທີ່ສຸດ, ນັກຂຽນໄດ້ເອົາຊີວິດຂອງລູກຜູ້ຊາຍຄົນໜຶ່ງມາສາລະພາບຮັກດ້ວຄວາມພໍໃຈຖ້າເຂົາຫາກບໍ່ໄດ້ເປັນເຈົ້າຂອງຍິງຄົນນັ້ນຊີວິດຂອງເຂົາຄົງບໍ່ມີຄວາມໝາຍ. ຍ້ອນອຳນາດຂອງຄວາມຮັກນີ້ຈຶ່ງເຮັດໃຫ້ຄົນເຮົາກ້າສະແດງອອກ ແລະສາລະພາບຕົນ, ເພື່ອເຮັດທຸກສິ່ງທຸກຢ່າງໃຫ້ຄວາມຮັກຂອງຕົນເອງສົມຫັວງ. ຢາກໄດ້ລົດຄວາມຮັກອັນຫວານຊື່ນນີ້ນັກຂຽນຕ້ອງໄດ້ເອົາໃຈໃສ່ພັນລະນາໃຫ້ເຂົ້າເລິກເຖິງກົກເຖິງຮາກຂອງຮັກນັ້ນ, ບາງຄັ້ງກໍສັນລະເສີນ, ບາງຄັ້ງກໍໂຈມຕີເພື່ອໃຫ້ເກີດລົດຄວາມຮັກທີ່ແທ້ຈິງ.

**ຄວາມຮັກທີ່ເກີດຈາກຮັກຂ້າງດຽວ**

ຄວາມຮັກປະເພດນີ້ເປັນຄວາມຮັກທີ່ຮຸນແຮງອັນຕະລາຍ ເພາະເປັນຄວາມຮັກທີ່ເກີດມີຂຶ້ນຈາກຝ່າຍໜຶ່ງຝ່າຍດຽວ, ແຕ່ເຖິງຢ່າງໃດກໍຕາມໃນວັນນະຄະດີກໍ່ຖືວ່າ ເປັນລົດຄວາມຮັກອີກຮູບແບບໜຶ່ງ. ສຳລັບນະວະນິຍາຍ "ພາຍຸຊີວິດ" ນີ້ເດັ່ນທີ່ສຸດກໍແມ່ນຄວາມຮັກຂອງໝໍຮ້ອຍເອກກໍລະກັນທີ່ມີຕໍ່ນາງຄຳເພັງດັ່ງສະແດງອອກບາງຕອນວ່າ:

*"ຖ້າບັກໃດກອງກະດູກບໍ່ຈຸຟ້າແມ່ນບໍ່ຈຳເປັນຕ້ອງຄິດເລື່ອງເອົາກັບນາງຄຳເພັງ." (ໜ:37)*

ຕົວຢ່າງຂ້າງເທິງ ນັກຂຽນໄດ້ສື່ໃຫ້ເຫັນເຖິງຄວາມຮັກທີ່ເກີດຂຶ້ນກັບຝ່າຍດຽວໂດຍບໍ່ໄດ້ຮັບຄວາມກາລຸນາຈາກຝ່າຍກົງກັນຂ້າມ, ເປັນຮັກທີ່ເມົາມົວ, ຫຼົງໄຫ, ຮຸນແຮງ, ບັງຄັບ, ໃຊ້ອຳນາດນາບຂູ່ເອົາຂອງໝໍຮ້ອຍເອກກໍລະກັນ, ໂດຍບໍ່ສົນໃຈວ່າຄູ່ຮັກຈະຄິດແນວໃດ, ເຮັດທຸກສິ່ງທຸກຢ່າງເພື່ອໃຫ້ຕົນເອງສົມຫວັງກໍພໍ, ຍ້ອນແນວນັ້ນມັນຈຶ່ງກາຍເປັນລົດຄວາມຮັກຂອງບ່າວ-ສາວອີກແບບໜຶ່ງໃນຄວາມຮັກຂອງໜຸ່ມສາວ, ເຮັດໃຫ້ຜູ້ອ່ານໄດ້ຮັບອາລົມເຊັ່ນກັນ, ຍ້ອນມີຄວາມຮັກຈຶ່ງເກີດມີຄວາມຫຶງຫວງ. ບາງຄັ້ງເຂົາກະບໍ່ໄດ້ສົນໃຈວ່າຄູ່ຮັກເຂົາຈະຮັກ ຫຼືບໍ, ພຽງແຕ່ເປັນຜູ້ຮັກເຂົາຂ້າງດຽວກໍພໍ ເຂົາກໍມີຄວາມສຸກແລ້ວດັ່ງ:

*"ຄຳເພັງເອີຍ ອ້າຍລາເມືອກ່ອນເນີ !ຂໍນັດນ້ອງໃນໂອກາດໜ້າ !ຈົ່ງເຫັນໃຈຜູ້ມາວອນຮັກນີ້ແດ່ຄົນງາມເອີຍ !ຢ່າງອນເກີນໄປເທາະ, ມາເທື່ອໜ້າຈະມີຂອງຂວັນງາມໆມາຕ້ອນ ອ້າຍໄປເນີ!." (ໜ:41)*

ຈາກຕົວຢ່າງນີ້ ຜູ້ອ່ານໄດ້ສຳຜັດກັບລົດຂອງຄວາມຮັກທີ່ເກີດຂຶ້ນກັບພຽງຝ່າຍໜຶ່ງຝ່າຍດຽວເທົ່ານັ້ນ, ເບິ່ງຈັ່ງໜຶ່ງກໍຄືເປັນຕາສົງສານ, ຄຳເພັງກໍຕົກຢູ່ໃນທ່າຮັບໂດຍບໍ່ຊ່າງຈະປະຕິເສດແນວໃດເພາະຮັກນີ້ແມ່ນໃຕ້ອຳນາດແຫ່ງຄວາມເປັນຄວາມຕາຍໂດຍທີ່ຕົນເອງບໍ່ໄດ້ຮັກ, ແຕ່ບາງຄັ້ງກໍຈຳເປັນຕ້ອງໄດ້ຍອມຮັບດັ່ງສະແດງອອກບາງຕອນວ່າ:

*"ຕາຍອ້າຍກໍລະກັນ !ອ້າຍຊິຊ່າງເວົ້າໃຫ້ນ້ອງແນວນັ້ນແທ້ອ້າຍ ມື້ກ່ອນອ້າຍເຄີຍບອກນ້ອງວ່າ ອ້າຍຮັກນ້ອງ ອ້າຍສົງສານຊີວິດກຳພ້າຂອງນ້ອງ, ອ້າຍຍັງເວົ້ານຳນ້ອງວ່າ ອ້າຍຈະບໍ່ເປັນສັດຕູຄູ່ອາຄາດກັບນ້ອງ ບໍ່ວ່າແຕ່ຈະຕົກໃນສະພາບແນວໃດກໍຕາມ, ຍ້ອນແນວນັ້ນນ້ອງຈຶ່ງເພິ່ງອີກເພິ່ງໃຈນຳເຈົ້ານາຍຜູ້ຄຸ້ມບ້ານຄອງເມືອງ. ແຕ່ບາດວ່າບໍ່ໄດ້ຕາມອີກຕາມໃຈມາແລ້ວພັດຊິຂ້າຊິຕາຍ ອ້າຍກໍລະກັນເອີຍ." (ໜ:56)*

ຈາກຕົວຢ່າງຂ້າງເທິງ ໄດ້ສື່ໃຫ້ຜູ້ອ່ານເຫັນໄດ້ເຖິງລົດຄວາມຮັກທີ່ຝ່າຍກົງກັນຂ້າມຖືກບັງຄັບມີຄວາມຈຳເປັນຕ້ອງໄດ້ຍອມຮັບຕາມສະຖານະການ, ຍ້ອມອຳນາດຂົ່ມຂູ່ ເຊິ່ງຄວາມຮັກແບບນີ້ບໍ່ໄດ້ເກີດຈາກໃຈຈິງ ແລະກໍຍາກທີ່ຈະສົມຫວັງໄດ້, ແຕ່ການຍອມຮັບນັ້ນກໍພຽງແຕ່ເພື່ອການເອົາຕົວລອດຈາກສະຖານະການເທົ່ານັ້ນ. ເຖິງຢ່າງໃດກໍຕາມ ນີ້ກໍຖືໄດ້ວ່າແມ່ນລົດຄວາມຮັກແບບໜຶ່ງໃນວັນນະຄະດີ, ສາມາດສະທ້ອນອາລົມຜູ້ອ່ານໄດ້ເຊັ່ນກັນ.

## 4. ວິພາກຜົນ

ຜ່ານການສຶກສາລົດແຫ່ງຄວາມຮັກໃນນະວະນິຍາຍ "ພາຍຸຊີວິດ" ຂອງ ດາວເໜືອ ເຫັນໄດ້ວ່າ ລົດວັນນະຄະດີແມ່ນບັນຫາສໍາຄັນໃນບົດປະພັນວັນນະຄະດີ, ສາມາດສ້າງອາລົມສະເທືອນໃຈໃຫ້ແກ່ຜູ້ອ່ານຢ່າງມີອັດຖະລົດ. ທ່ານ ທຽນ ວົງປະກາຍ (ດາວເໜືອ) ແມ່ນນັກຂຽນຜູ້ໜຶ່ງທີ່ມີຄວາມສາມາດໃນການພັນລະນາລົດຄວາມຮັກໃນວັນນະຄະດີຫຼາຍແບບເຂົ້າໃນບົດປະພັນຂອງຕົນເອງ, ໂດຍສະເພາະ ລົດແຫ່ງຄວາມຮັກລະຫວ່າງສະມາຊິກໃນຄອບຄົວ ເປັນໜຶ່ງໃນຈໍານວນລົດຄວາມຮັກທີ່ນັກຂຽນໄດ້ພັນລະນາຢ່າງຊັດເຈນ ແລະມີລົດຊາດທີ່ສຸດໃນບົດເລື່ອງ, ລົດແຫ່ງຄວາມຮັກລະຫວ່າງໝູ່ເພື່ອນຫຼາຍແຫ່ງທີ່ມີລົດຊາດ, ໂດຍຜ່ານການພັນລະນາຂອງນັກແຕ່ງໄດ້ເຮັດໃຫ້ຜູ້ອ່ານມີຄວາມສະເທືອນໃຈກັບລົດຄວາມຮັກນີ້ ເໝືອນກັບຊີວິດຕົວຈິງໃນສັງຄົມ, ລົດແຫ່ງຄວາມຮັກລະຫວ່າງບ່າວ-ສາວເຫັນໄດ້ວ່ານັກຂຽນໄດ້ເອົາໃຈໃສ່ພັນລະນາຢ່າງເປີດແປນ ແລະ ມີຫຼາຍຄູ່, ໃນແຕ່ລະຄູ່ກໍຖືວ່າມີລົດຊາດແຕກຕ່າງກັນໄປຕາມແຕ່ລະກໍລະນີ, ນັກແຕ່ງໄດ້ສ້າງລົດໄດ້ຫຼາຍອາລົມມີທັງຮັກທັງເສົ້າຕາມໆກັນ. ສອດຄ່ອງກັບການນໍາສະເໜີຄວາມຮັກສາມລ່ຽງຂອງ ໂຣເບີດ ສເຕີນເບີກ (Robert Sternberg, 1988) ຄື ມູມຍອດເທິງຄືມູມໃກ້ຊິດສະໜິດສະໜົມໄດ້ຮັບຄວາມອົບອຸ່ນຕໍ່ກັນ ແລະກັນ. ມູມເບື້ອງຊ້າຍມີໝາຍເຖິງ ປະສົບການຂອງຄວາມຮູ້ທາງອາລົມຫຼືຕັນຫາເຊິ່ງຈະນໍາໄປສູ່ການດຶງດູດທາງຮູບຮ່າງໜ້າຕາ, ຄວາມສໍາພັນທາງເພດ ແລະຄວາມຮັກທາວນສຶດຊື່ນ. ສ່ວນມູມເບື້ອງຂວາມີນັ້ນຄື ການຕົກລົງປົງໃຈ ເຊິ່ງໝາຍເຖິງການຕັດສິນໃຈທີ່ຈະຮັກໃຜຜູ້ໜຶ່ງ ແລະຍຶດໝັ້ນທີ່ຈະຮັກສາຄວາມສໍາພັນໄວ້ຕໍ່ໄປ .ເຖິງຢ່າງໃດກໍຕາມ, ຈໍານວນລົດຄວາມຮັກທີ່ຍົກມາເປັນຕົວຢ່າງອ້າງອີງນີ້ກໍພຽງແຕ່ແມ່ນສ່ວນໃດສ່ວນໜຶ່ງເທົ່ານັ້ນ, ໂດຍກຸ່ມຜູ້ສຶກສາໄດ້ຍົກມາຕາມຂອບເຂດທີ່ໄດ້ກໍານົດໄວ້, ນອກນັ້ນ ໃນບົດເລື່ອງກໍຍັງມີຫຼາຍລົດ ແລະຫຼາຍແບບທີ່ສະແດງອອກ, ເມື່ອຜູ້ອ່ານຜູ້ຟັງໄດ້ອ່ານແລ້ວສາມາດເກີດຈິນຕະນາການກັບຄວາມຮັກດັ່ງກ່າວໂດຍຜ່ານການໃຊ້ສັບພາສາທີ່ມີຄວາມໂດດເດັ່ນ, ມີໂວຫານສາມາດສ້າງໃຫຜູ້ອ່ານເກີດຄວາຫຼົງໄຫຼໃນບົດປະພັນ.

## 5. ສະຫຼຸບ

ການສຶກສາລົດຄວາມຮັກໃນວັນນະຄະດີ ນະວະນິຍາຍ "ພາຍຸຊີວິດ" ຂອງດາວເໜືອ ໂດຍນໍາໃຊ້ທິດສະດີຂອງ ສີລາ ວີລະວົງ (1996) ແລະມາເຮດ ຊາມາ (Mahesh Shama: 2014) ພົບວ່າ ນັກແຕ່ງມີຄວາມສາມາດພັນລະນາຄວາມຮັກໃນຫຼາຍລົດຊາດເຊັ່ນ ລົດແຫ່ງຄວາມຮັກລະຫວ່າງສະມາຊິກໃນຄອບຄົວມີ: ຄວາມຮັກຂອງພໍ່ແມ່ທີ່ມີຕໍ່ລູກ, ຄວາມຮັກຂອງລູກຕໍ່ພໍ່ແມ່ ແລະ ຄວາມຮັກແບບອ້າຍນ້ອງຮ່ວມອຸທອນ; ລົດແຫ່ງຄວາມຮັກລະຫວ່າງໝູ່ເພື່ອນ ສ່ວນຫຼາຍເປັນຄວາມຮັກທີ່ມີຈາກໃຈຈິງ, ຮັກເພື່ອນດ້ວຍຄວາມບໍລິສຸດ, ມີຫຼາຍແບບ, ຫຼາຍລົດ, ແຕ່ທີ່ປາກົດເດັ່ນທີ່ສຸດແມ່ນ ຄວາມຮັກລະຫວ່າງໝູ່ເພື່ອນທົ່ວໄປ ແລະ ຄວາມຮັກລະຫວ່າງໝູ່ເພື່ອນຮ່ວມອຸດົມການ; ລົດແຫ່ງຄວາມຮັກລະຫວ່າງໜຸ່ມສາວ ມີລົດຄວາມຮັກທີ່ເກີດຈາກໃຈຈິງ ແລະຄວາມຮັກທີ່ຖືກບັງຄັບ. ນະວະນິຍາຍ "ພາຍຸຊີວິດ" ຂອງ ດາວເໜືອ ແມ່ນບົດປະພັນວັນນະຄະດີໜຶ່ງທີ່ນັກຂຽນໄດ້ພັນລະນາເຖິງລົດຄວາມຮັກໃນວັນນະຄະດີໄດ້ຢ່າງມີລົດຊາດ ແລະສາມາດສ້າງອາລົມໃຫ້ແກ່ຜູ້ອ່ານໄດ້ເປັນຢ່າງດີ, ຍ້ອນແນວນັ້ນຈຶ່ງເຮັດໃຫ້ນັກຂຽນປະສົບຜົນສໍາເລັດ ຄືໄດ້ຮັບລາງວັນວັນນະກໍາສ້າງສັນຍອດຢ້ຽມແຫ່ງອາຊຽນໃນປີ 2003.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

ສີລາ ວີລະວົງ.(1996). ປະໂຫຍດຂອງວັນນະຄະດີ. ໂຜ່ໜາມການພິມ.

ດາວເໜືອ.(2003). ພາຍຸຊີວິດ. ວຽງຈັນ: ພິມເທື່ອທີ 3, ສໍານັກພິມ ແລະຈໍາໜ່າຍປຶ້ມແຫ່ງ ສ.ປ.ປ. ລາວ

ບໍ່ແສງຄໍາ ວົງດາລາ ພ້ອມຄະນະ. (2008). ວັນນະຄະດີລາວ. ສໍານັກພິມສຶກສາຫວຽດນາມ.

ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາ ປີທີ 6. (2006). ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ.

ເພັດພູທອນ ແກ້ວວິຈິດ. (2015). ວິເຄາະເລື່ອງຈໍາປາສີ່ຕົ້ນ ແລະ ນາງແຕງອ່ອນ: ຫຼັກຄໍາສອນຂອງສາສະໜາພຸດ ແລະຄຸນຄ່າທາງສັງຄົມ.

ວັນນະຄະດີລາວ 1. (2009). ກຸ່ມວິຊາສະເພາະສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ (ປີທີ 1).

ວັດຈະນານຸກົມສະບັບລາຊະບັນດິດສະຖານ (ພສ. 2542) ພິມຄັ້ງທີ 1. ກຸງເທບ: ປະເທດໄທ.

Bennett, A. (2014). Literary taste: how to form it. Retrieved July 11, 2016, from https://ebooks.adelaide.edu.au/b/bennett/arnold/literary-taste/complete.html

Oxford English Dictionary (2016). Taste. Retrieved on July 12, 2016, from http://www.oxforddictionaries.com/definition/english/taste

Scruton, R. & Munro, Th. (2013). The development of western aesthetics. Retrieved on July 20, 2016 from http://www.compilerpress.ca/Competitiveness/Anno/Anno%20Scruton%20Aesthetics%20EB%202003%20c.htm

Sharma M. (2014). European academic research: the eastern and western aesthetics: Re-routing Rasa theory. Retrieved on July 27, 2016, from https://www.google.la/webhp?sourceid=chrome-instant&ion=1&espv=2&ie=UTF-8#q=Rasa+theory+in+western+eye

The Free Dictionary (2016). Alankara. Retrieved on July 20, 2016 from http://encyclopedia2.thefreedictionary.com/Alankara

Young, J. (2015). Charles batteux: the fine arts reduced to a single principle. Oxford University Press Retrieved on July 20, 2016 from https://global.oup.com/academic/product/charles-batteux-the-fine-arts-reduced-to-a-single-principle-9780198747116?cc=us&lang=en&